ພະຍາກອນ ອຽງຈັນ
24–31°C
ວັນອັງຄານ 03/11 · ເມກບາງສ່ວນ

ມະຫາສານ


ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນອັງຄານ 3 ພະຈິກ 2026 · ສະບັບທີ 013 | ສະຫຼຸບຂ່າວປະຈຳວັນຈັນ 2 ພະຈິກ 2026 · 24 ຂ່າວ | 18 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ເຫດການ** · 14:44 ໂມງ · ອ່ານ 297 ຄັ້ງ

(ມີຄລິບ)! ນາທີໂຈນແອບນຽນເຮັດທ່າມາຊື້ເຄື່ອງ ກ່ອນລັກລົດຈັກໜີ ລອຍນວນ!



ໃນວັນທີ 31/10/2026 ເກີດເຫດໂຈນລັກລົດຈັກປະຊາຊົນ ຢູ່ເຂດບ້ານໂພນຕ້ອງສະຫວາດ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ຕາມພາບຈາກກ້ອງວົງຈອນປິດເຜີຍໃຫ້ເຫັນຄົນຮ້າຍໄດ້ທຳທ່າເຂົ້າມາຊື້ເຄື່ອງພາຍໃນຮ້ານ ກ່ອນຈະອອກໄປແລ້ວລັກລົດຍີ່ຫໍ້ເວັບໄອ ປ້າຍທະບຽນ (ຈ.ນ 5539) ຖ້າໃຜພົບເຫັນ ຫຼື ມີເບາะແສສາມາດແຈ້ງໄດ້ທີ່ເບີ 02052148180 ຈະມີລາງວັນສົມມະນາຄຸນໃຫ້ ຂໍໃຫ້ເຈົ້າໜ້າຈັບຕົວຄົນຮ້າຍໃຫ້ໄດ້ໂດຍໄວ.

◆ **ຂ່າວຕ່າງປະເທດ** · 10:58 ໂມງ

ສະຫຼົດ! ເກີດເຫດເຮືອບິນເຈັດສ່ວນຕົວຕົກທີ່ລັດຟລໍຣິດາ ລູກເຮືອທັງໝົດ 9 ຄົນເສຍຊີວິດຍົກລຳ




ໃນວັນອາທິດ ທີ 1 ພະຈິກ 2026 ເກີດເຫດເຮືອບິນເຈັດສ່ວນຕົວຕົກໃນເຂດທີ່ຢູ່ອາໄສ ທາງພາກໃຕ້ຂອງລັດຟລໍຣິດາ ປະເທດສະຫະລັດ ສົ່ງຜົນໃຫ້ຜູ້ໂດຍສານ ແລະ ລູກເຮືອທັງໝົດ 9 ຄົນເສຍຊີວິດຍົກລຳ ຂະນະທີ່ເຈົ້າໜ້າທີ່ກຳລັງເລັ່ງສືບສວນຫາສາເຫດ.

ເຮືອບິນສ່ວນຕົວລຸ້ນ Learjet 60 ເຊິ່ງມີຜູ້ໂດຍສານ ແລະ ລູກເຮືອລວມທັງໝົດ 9 ຄົນ ປະສົບເຫດຕົກໃນເຂດທີ່ຢູ່ອາໄສໃກ້ກັບຄຸ້ມ Crest Haven ໃນລັດຟລໍຣິດາ ທາງພາກໃຕ້ຂອງສະຫະລັດ ໆ ໂດຍທຸກຄົນທີ່ຢູ່ເທິງເຮືອບິນເສຍຊີວິດທັງໝົດ.

ຕໍ່ໜ້າ 2

ໃນສະບັບນີ້


2 ຂ່າວຕ່າງປະເທດ
2 ຂ່າວພາຍໃນ
16 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
17 ແຈ້ງການ
18 ກິລາ



◆ **ແຈ້ງການ** · 10:08 ໂມງ

ແຈ້ງການມອດໄຟ ວັນທີ 03,05,07/11/2026

ອ່ານໜ້າ 17 ▸



◆ **ຂ່າວຕ່າງປະເທດ** · 13:00 ໂມງ

ອິນເດຍເລັ່ງອົບພະຍົບປະຊາຊົນ ກຽມຮັບມື “ພາຍຸມູຣຊູ” ໄຊໂຄລ...

ອ່ານໜ້າ 5 ▸



◆ **ຂ່າວຕ່າງປະເທດ** · 13:19 ໂມງ

ນັກວິທະຍາສາດເຕືອນ! ໂລກກຳລັງປະເຊີນຄວາມສ່ຽງ...

ອ່ານໜ້າ 6 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ສະຫຼົດ! ເກີດເຫດເຮືອບິນເຈັດສ່ວນຕົວຕົກທີ່ລັດຟລໍຣິດາ ລູກເຮ... (ຕໍ່ຈາກໜ້າ 1)

ອົງການບໍລິຫານການບິນແຫ່ງຊາດ ສະຫະລັດ (FAA) ລະບຸວ່າ ເຮືອບິນລຳດັ່ງກ່າວຕົກໃນເວລາປະມານ 12:50 ໂມງ ຕາມເວລາທ້ອງຖິ່ນຝັ່ງຕາເວັນອອກ ຂອງສະຫະລັດ.

ທ່ານ ຊອນ ດັຟຟີ (Sean Duffy) ລັດຖະມົນຕີຄົມມະນາຄົມ ສະຫະລັດ ໄດ້ໂພສຜ່ານສື່ສັງຄົມວ່າ ຜູ້ທີ່ຢູ່ເທິງເຮືອບິນທັງ 9 ຄົນ ໄດ້ເສຍຊີວິດ ຈາກເຫດການຄັ້ງນີ້ ພ້ອມທັງເອີ້ນ ເຫດການນີ້ວ່າເປັນໂສກນາດຕະກຳທີ່ ຮ້າຍແຮງ.

FAA ເປີດເຜີຍວ່າ ເຮືອບິນ Learjet 60 ລຳນີ້ ໄດ້ອອກເດີນທາງ ຈາກສະໜາມບິນນານາຊາດ Austin-Bergstrom ໃນລັດເທັກຊັດ ໂດຍມີຈຸດໝາຍປາຍທາງໄປຍັງ ສະໜາມບິນນານາຊາດ North Eleuthera ໃນປະເທດບາຮາມາສ ແຕ່ ມາປະສົບເຫດຕົກໃນລັດຟລໍຣິດາກ່ອນ.

ຂະນະທີ່ສື່ທ້ອງຖິ່ນລາຍງານວ່າ ເຮືອບິນໄດ້ຕົກໃສ່ລານຈອດລົດບ້ານ ເຄື່ອນທີ່ (Mobile Home Park) ໃນເມືອງ Greenacres ເຮັດໃຫ້ລົດ ບ້ານຢ່າງໜ້ອຍ 1 ຫຼັງຖືກທຳລາຍ.

ຈາກບັນທຶກສຽງການຕິດຕໍ່ ລະຫວ່າງນັກບິນ ແລະ ຫໍຄວບຄຸມການ ຈະລາຈອນທາງອາກາດ ທີ່ເຜີຍແຜ່ໂດຍ ເວັບໄຊ LiveATC ລະບຸວ່າ ບໍ່ກີ່ນາທີ ກ່ອນເຮືອບິນຕົກ ນັກບິນໄດ້ລາຍງານວ່າ ເລີ່ມມີນ້ຳກ້ອນເກາะຕາມລຳຕົວເຮືອບິນ.

ອຸນຫະພູມອາກາດພາຍນອກຫຼຸດຕ່ຳ ລົງເຖິງ -47 ອົງສາເຊລຊຽດ ພ້ອມທັງພົບ ສະພາບອາກາດປັ່ນປ່ວນລະດັບປານກາງ ສິ່ງຜົນໃຫ້ເຮືອບິນເຫວີ່ຍຂຶ້ນ-ລົງ ເປັນ ໄລຍະສູງເຖິງ 200 ແມັດ.

ຫຼັງຈາກນັ້ນບໍ່ດົນ ນັກບິນໄດ້ ລາຍງານວ່າເລີ່ມມີຝົນຕົກ ແລະ ພະຍາຍາມຂໍປັບເພີ່ມລະດັບຄວາມສູງຂອງ ເຮືອບິນ ພ້ອມທັງປະກາດສະຖານະການ ສຸກເສີນ.

ຕໍ່ມາ ຂໍ້ມູນຈາກເວັບໄຊ ADS-B Exchange ສະແດງໃຫ້ເຫັນວ່າ ເຮືອບິນລຳດັ່ງກ່າວໄດ້ດີ່ງລົງຈາກຄວາມສູງ ກວ່າ 8,200 ແມັດ ພາຍໃນເວລາພຽງ 1 ນາທີ ກ່ອນທີ່ສັນຍານຕິດຕາມຖ້ຽວບິນຈະ ຂາດຫາຍໄປ.

ຂະນະນີ້ ຄະນະກຳມະການຄວາມ ປອດໄພດ້ານການຂົນສົ່ງແຫ່ງຊາດສະຫະ ລັດ (NTSB) ກຳລັງດຳເນີນການ ສືບສວນຫາສາເຫດຂອງເຫດການຄັ້ງນີ້.

ທີ່ມາ: Reuters / CNN

ຂ່າວພາຍໃນ

ຂ່າວພາຍໃນ · 15:47 ໂມງ · ອ່ານ 14 ຄັ້ງ

ທ່ານ ອັນໄຊ ພອງສະຫວັນ ປະທານອົງການກວດກາແຫ່ງລັດ ເນັ້ນແກ້ໄຂບັນຫາ ຮອບດ້ານ ພັດທະນາເສດຖະກິດ ປາບປາມອາຊະຍາກຳ ແລະ ຍົກລະດັບຊີວິດ ປະຊາຊົນ.



ວັນທີ 2 ພະຈິກ 2026, ທ່ານ ອັນໄຊ ພອງສະຫວັນ ກຳມະການກົມການ ເມືອງສູນກາງພັກ, ຄະນະເລຂາທິການ ສູນກາງພັກ, ປະທານຄະນະກວດກາ ສູນກາງພັກ, ປະທານອົງການກວດກາແຫ່ງ ລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດ ບັງຫຼວງສູນກາງ ໄດ້ເຄື່ອນໄຫວເຮັດວຽກ ແລະ ໂອ້ລົມຕໍ່ບັນດາກຳມະການປະຈຳພັກ ແຂວງ, ກຳມະການພັກແຂວງ, ເລຂາພັກ ເມືອງ, ຫົວໜ້າ, ຮອງຫົວໜ້າພະແນກ ການ-ອົງການທຽບເທົ່າອ້ອມຂ້າງແຂວງ, ພະນັກງານອາວຸໂສບຳນານ, ພະນັກງານ ຫຼັກແຫຼ່ງ, ນັກທຸລະກິດ ພາຍໃນແຂວງຄຳ ມ່ວນ.

ທ່ານ ສົມໃຈ ພານິຈັນ ຮອງເລຂາ ພັກແຂວງ, ຜູ້ຊີ້ນຳວຽກງານການເມືອງ-ແນວຄິດ, ວຽກງານພັກ-ພະນັກງານ ໄດ້ ຕາງໜ້າການນຳຂອງແຂວງ ລາຍງານ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃນໄລຍະ 09 ເດືອນ ຂອງປີ 2026 ທີ່ຜ່ານມາ ເສດຖະກິດມະ ຫາພາກຂອງແຂວງຄຳມ່ວນ ຂະຫຍາຍຕົວ ໃນລະດັບ 5.6%, ລວມຍອດ ຜະລິດຕະພັນ ບັນລຸໄດ້ 25,035 ຕື້ກີບ, ເທົ່າກັບ 86% ມະຕິສະພາໝົດປີ ໃຫ້ບັນ ລຸ 28,941 ຕື້ກີບ, ລາຍຮັບສະເລ່ຍຕໍ່ຫົວ ຄົນ 2,657 ໂດລາສະຫະລັດ, ດ້ານການ ລົງທຶນຂອງລັດ: ໄດ້ຮັບອະນຸມັດໂຄງການ ລົງທຶນຂອງລັດທັງໝົດ 518 ໂຄງການ, ມູນຄ່າ 994.65 ຕື້ກີບ ແລະ ເງິນເກີນ ແຜນ 780.96 ຕື້ກີບໃນປີທີ່ຜ່ານມາ, ໄດ້ ຈັດຕັ້ງປະຕິບັດ 342 ໂຄງການ ມູນຄ່າ 617.97 ຕື້ກີບ ເທົ່າກັບ 138%, ສາມາດດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 33 ໂຄງການ ມີ ທຶນທັງໝົດ 9,301 ຕື້ກີບ, ທຶນຈົດທະ

ຕໍ່ໜ້າ 3

ທ່ານ ວັນໄຊ ພອງສະຫວັນ ປະທານອົງການກວດກາແຫ່ງລັດ ເ... (ຕໍ່ຈາກໜ້າ 2)

ບຽນ 2,403.86 ຕື້ກີບ ເທົ່າກັບ 50% ຂອງແຜນການປີ, ການລະດົມທຶນເພື່ອການພັດທະນາ ໄດ້ທັງໝົດ 5,333.76 ຕື້ກີບ ເທົ່າກັບ 71.65% ມະຕິສະພາໝົດປີ ໃຫ້ໄດ້ 7,444.32 ຕື້ກີບ, ໃນນີ້: ການລົງທຶນຂອງລັດ 617.97 ຕື້ກີບ ເທົ່າກັບ 138%, ການຊ່ວຍເຫຼືອທາງການເພື່ອການພັດທະນາ 564.53 ຕື້ກີບ ເທົ່າກັບ 63.19%, ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ບັນລຸໄດ້ 2,403.86 ຕື້ກີບ ເທົ່າກັບ 50% ຂອງແຜນການປີ, ລະບົບສິນເຊື່ອທະນາຄານປະຕິບັດໄດ້ 1,747.39 ຕື້ກີບ ເທົ່າກັບ 138.08%, ດ້ານງົບປະມານ: ໃນປີ 2026 ແຜນລາຍຮັບງົບປະມານຂອງແຂວງ ທີ່ໄດ້ຮັບມອບໝາຍມີທັງໝົດ 4,846 ຕື້ກີບ. ມາຮອດປະຈຸບັນ ສາມາດຈັດເກັບໄດ້ 5,549 ຕື້ກວ່າກີບ, ເທົ່າກັບ 114.50% (ເກີນແຜນທັງໝົດ 702.76 ຕື້ກີບ),

ໂອກາດນີ້, ທ່ານ ວັນໄຊ ພອງສະຫວັນ ກໍໄດ້ມີຄຳເຫັນໂອ້ລົມ ແລະ ຊີ້ນຳ ໃຫ້ພະນັກງານການນຳ ແລະ ພະນັກງານຫຼັກແຫຼ່ງຂອງແຂວງຄຳມ່ວນ ເອົາໃຈໃສ່ຄື: ສືບຕໍ່ປະຕິບັດວຽກງານ ປກຊ-ປກສ ທົ່ວປ່ວງຊົນຮອບດ້ານ, ສ້າງກຳລັງໃຫ້ມີຄຸນທາດການເມືອງໜັກແໜ້ນ ແລະ ກຽມພ້ອມສູ້ຮົບຕະຫຼອດເວລາ, ທັນກຳລັງລົງກໍ່ສ້າງຮາກຖານການເມືອງຢູ່ບັນດາຕາແສງ, ສ້າງບ້ານ ປກຊ-ປກສ ໃຫ້ເຂັ້ມແຂງ, ເອົາໃຈໃສ່ແກ້ໄຂບັນຫາຢາເສບຕິດ, ການຄ້າຂາຍເຖື່ອນ, ຂໍ້ລັກງັດແງະ ແລະ ເນັ້ນການປາບປາມ ກຸ່ມແກ້ງຄໍເຊັນເຕີ ຢ່າງຈິງຈັງ, ພ້ອມນັ້ນກໍ່ໃຫ້ຖືເອົາເສດຖະກິດເປັນໜ້າທີ່ໃຈກາງ ໂດຍນຳທ່າແຮງດ້ານກະສິກຳ, ປຸກຝັງ-ລ້ຽງສັດ ແລະ ລະບົບຂົນສົ່ງ, ຊຸກຍູ້ເສດຖະກິດພູມປັນຍາຊາວບ້ານໃຫ້ເປັນກຸ່ມການຜະລິດສິນຄ້າ, ເພີ່ມທະວີຄຸ້ມຄອງລາຍຮັບໃຫ້ທັນສະໄໝ, ປະຢັດມັດທະຍັດລາຍຈ່າຍ ແລະ ສະກັດກັ້ນການຮົ່ວໄຫຼ, ໃຫ້ກວດກາຄືນບັນດາໂຄງການ ທີ່ບໍ່ມີຄວາມຄືບໜ້າ ຖ້າເຮັດບໍ່ໄດ້ແມ່ນໃຫ້ ໂຈະ ຫຼື ຍົກເລີກສັນຍາ, ເຂັ້ມງວດໃນການຈັດຕັ້ງປະຕິບັດ ຄຳສັ່ງ 15/ນຍ ຢ່າງເປັນຮູບປະທຳ ເພື່ອຮັກສາເນື້ອທີ່ປ່າປົກຫຸ້ມໃຫ້ໄດ້ 70%, ວາງຄາດໝາຍ 5 ປີຕໍ່ໜ້າ ສູ້ຊົນດຶງດູດນັກທ່ອງທ່ຽວໃຫ້ໄດ້ 5 ລ້ານເທື່ອຄົນ, ໂດຍຕ້ອງປັບປຸງການບໍລິການ, ໂຮງແຮມ, ຮ້ານອາຫານ ແລະ ເຄື່ອງຕ້ອນຂອງຝາກໃຫ້ໄດ້ມາດຕະຖານ, ແກ້ໄຂບັນຫາຄຸນນະພາບການສຶກສາທີ່ຫຼຸດລົງ ແລະ ໂຮງຮຽນຖືກປິດ, ພ້ອມທັງຊຸກຍູ້ເດັກເກນອາຍຸໃຫ້ໄດ້ເຂົ້າຮຽນ ແລະ ຫັນປ່ຽນວິທີການຮຽນການສອນໃຫ້ນັກຮຽນເປັນເຈົ້າການ, ຍົກລະດັບການບໍລິການ ແລະ ວັດທະນະທຳຈັນຍາບັນຂອງແພດໝໍຢູ່ໂຮງໝໍຊຸມຊົນ, ເນັ້ນການພັດທະນາສີມືແຮງງານໃຫ້ຊາວໜຸ່ມ ເພື່ອດຶງດູດແຮງງານໃຫ້ມີວຽກເຮັດງານທຳກັບທີ່ຢູ່ທ້ອງຖິ່ນ, ວຽກງານກໍ່ສ້າງພັກ-ພະນັກງານ: ໃຫ້ຖືເອົາຄຸນນະພາບ ເປັນກົກ, ເລືອກເອົາຜູ້ທີ່ມີຄວາມບຸກບືນຫ້າວຫັນ ແລະ ໃຫ້ການສຶກສາອົບຮົມດ້ານອຸດົມການໃຫ້ຈະແຈ້ງ, ຮັດແໜ້ນຄວາມສາມັກຄີ ແລະ ການຮ່ວມມືຮອບດ້ານກັບບັນດາແຂວງໃກ້ຄຽງ ໂດຍຜ່ານກົນໄກພົບປະແລກປ່ຽນ, ພ້ອມທັງເພີ່ມທະວີການລາດຕະເວນຕາມຊາຍແດນ ເພື່ອສະກັດກັ້ນການເຂົ້າ-ອອກເມືອງຜິດກົດໝາຍ, ຢາເສບຕິດ ແລະ ການຄ້າມະນຸດ, ສຳລັບວຽກກວດກາ: ຕ້ອງເຂົ້າໃຈວ່າ ວຽກກວດກາແມ່ນໜ້າທີ່ຂອງຄະນະພັກ, ການກວດກາຕ້ອງເຮັດແບບໂປ່ງໃສ (ເຫັນທັງດ້ານດີ ເພື່ອເສີມຂະຫຍາຍ ແລະ ຕຳນິຈຸດອ່ອນເພື່ອແກ້ໄຂ), ຖືເປັນວຽກປົກກະຕິແຕ່ຫົວທີເພື່ອສະກັດກັ້ນການສູນເສຍ ແລະ ຜູ້ທີ່ເປັນພະນັກງານກວດກາ ຕ້ອງມີຄຸນສົມບັດ "ສາຍຕາແຫຼມຄົມ, ຫູໄວ, ໃຈສັດຊື່, ມືສະອາດ", ເອົາໃຈໃສ່ຄວາມເປັນໃຈກາງ ເຕົ້າໂຮມຄວາມສາມັກຄີພາຍໃນໃຫ້ເປັນປຶກແຜ່ນແໜ້ນໜາ, ເຄົາລົບ ແລະ ປະຕິບັດ ຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະບຸກຄົນຮັບຜິດຊອບ, ຕິດແທດຮາກຖານຕົວຈິງ ພ້ອມທັງ ໃຫ້ຄວາມເຄົາລົບ ແລະ ຍາດແຍ່ງຄຳຄິດຄຳເຫັນຈາກພະນັກງານອາວຸໂສບຳນານ ເພື່ອເປັນບົດຮຽນ ແລະ ກຳລັງແຮງໃນການພັດທະນາແຂວງຄຳມ່ວນໃຫ້ກ້າວຂຶ້ນຢ່າງວ່ອງໄວ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ.

◆ **ຂ່າວພາຍໃນ** · 13:51 ໂມງ · ອ່ານ 14 ຄັ້ງ

ວັງວຽງ ເມືອງແຫ່ງການທ່ອງທ່ຽວ ຊາວເນັດແຊຣ໌ກັນ ສະພາບທາງ 13 ເໜືອ ເພໜັກ-ຝຸ່ນໄຈ້ ກຸ້ມ!



ວັນທີ 31 ຕຸລາ 2026 ປະຊາຊົນສ່ອງແສງວ່າ: ເສັ້ນທາງ ເສັ້ນທາງ13 ເໜືອ ຈຸດຜ່ານເມືອງວັງວຽງ ແຂວງວຽງຈັນ ແຕ່ເຂດຈະເຂົ້າໄປຫາທາງດ່ວນ ຂຶ້ນໄປຫາທາງຜາ ຮອມ ເສັ້ນທາງເປ່ເພເປັນຂຸມ ເປັນຈຸດໆໄປ ແລະ ເປັນຂີ້ຝຸ່ນໄຫງ່ກຸ້ມທົບ ເຮັດໃຫ້ເຮືອນ ແລະ ຮ້ານ ແຄມທາງໄດ້ຮັບຜົນກະທົບໜັກ.

◆ **ຂ່າວພາຍໃນ** · 11:49 ໂມງ · ອ່ານ 12 ຄັ້ງ

ພະນະທ່ານ ທອງສະຫວັນ ພົມວິຫານ ຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງການຕ່າງປະເທດ ຈະເດີນທາງໄປຢ້ຽມຢາມ ສາທາລະນະລັດ ເບລາຣຸດຊີ ຢ່າງເປັນທາງການ ວັນທີ 4-6 ພະຈິກ 2026



ແຈ້ງການຂອງກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ພ້ອມດ້ວຍຄະນະ ຈະເດີນທາງໄປຢ້ຽມຢາມ ສາທາລະນະລັດ ເບລາຣຸດຊີ ຢ່າງເປັນທາງການ ວັນທີ 4-6 ພະຈິກ 2026

ສະຫວັນ ພົມວິຫານ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພ້ອມດ້ວຍຄະນະ ຈະເດີນທາງໄປຢ້ຽມຢາມ ສາທາລະນະລັດ ເບລາຣຸດຊີ ຢ່າງເປັນທາງການ ໃນວັນທີ 4-6 ພະຈິກ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 15:08 ໂມງ · ອ່ານ 8 ຄັ້ງ

ກະຊວງສາທາລະນະສຸກ ມອບວັກຊີນປ້ອງກັນໄຂ້ຫວັດໃຫຍ່ຕາມລະດູການ ຈຳນວນ 1.000 ໂດສ ມູນຄ່າ 112 ລ້ານກີບ ໃຫ້ກະຊວງປ້ອງກັນຄວາມສະຫງົບ



ກະຊວງສາທາລະນະສຸກ ໄດ້ມອບວັກຊີນປ້ອງກັນໄຂ້ຫວັດໃຫຍ່ຕາມລະດູການ ຈຳນວນ 1.000 ໂດສ ມູນຄ່າ 112 ລ້ານກີບ ໃຫ້ກະຊວງປ້ອງກັນຄວາມສະຫງົບ (ປກສ) ແລະ ສ້າງຂະບວນການສັກວັກຊີນໃຫ້ນາຍ ແລະ ພົນຕຳຫລວດ ອ້ອມຂ້າງກະຊວງ ປກສ ໃນວັນທີ 30 ຕຸລາ 2026 ຜ່ານ.

ໃນໂອກາດນີ້, ທ່ານ ນາງ ອຳພອນ ວິຊາເທບ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ໄດ້ໃຫ້ຮູ້ວ່າ: ພັກ ແລະ ລັດຖະບານ ໄດ້ໃຫ້ຄວາມສຳຄັນເອົາໃຈໃສ່ເປັນພິເສດ ໃນວຽກງານການຮັກສາ, ສົ່ງເສີມ ສຸຂະພາບ ແລະ ເຝົ້າລະວັງປ້ອງກັນພະຍາດ ໃຫ້ແກ່ປະຊາຊົນບັນດາເຜົ່າໃນທົ່ວປະເທດ, ກະຊວງສາທາລະນະສຸກ ໃນນາມເປັນເສນາທິການໄດ້ຍຶດຖືເອົາທິດທາງ "ການປ້ອງກັນພະຍາດເປັນຕົ້ນຕໍ, ການປິ່ນປົວເປັນສຳຄັນ" ເພື່ອຮັບປະກັນໃຫ້ປະຊາຊົນບັນດາເຜົ່າທຸກຊັ້ນຄົນ, ທຸກຂົງເຂດ, ຕະຫລອດຮອດກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງໄດ້ຮັບການຮັກສາສຸຂະພາບຢ່າງທົ່ວເຖິງ. ການມອບ-ຮັບວັກຊີນ ແລະ ເປີດຂະບວນການສັກວັກຊີນປ້ອງກັນພະຍາດໄຂ້ຫວັດໃຫຍ່ ຕາມລະດູການຮ່ວມກັນໃນຄັ້ງນີ້, ແມ່ນໜຶ່ງໃນຄວາມພະຍາຍາມ ແລະ ຄວາມເອົາໃຈໃສ່ຢ່າງຈິ່ງຈັງ ຂອງກະຊວງສາທາລະນະສຸກ (ສທ) ໃນການຮ່ວມມືຢ່າງແໜ້ນແຟ້ນກັບ ກະຊວງປ້ອງກັນຄວາມສະຫງົບ ແນໃສ່ຊ່ວຍຫລຸດຜ່ອນຄວາມສ່ຽງຂອງການລະບາດ, ປ້ອງກັນພະຍາດໄຂ້ຫວັດຕາມລະດູການ ແລະ ເປັນການເພີ່ມທະວີຄວາມສາມາດ ໃນການເບິ່ງແຍງສຸຂະພາບ ໃຫ້ແກ່ການນຳຫລັກແຫລ່ງ, ພະນັກງານ-ນັກຮົບ ແພດໝໍ ກໍຄື ເຈົ້າໜ້າທີ່ໃນຂົງເຂດກຳລັງປ້ອງກັນຄວາມສະຫງົບ ໃຫ້ມີສຸຂະພາບແຂງແຮງ ໄດ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ໃນໂອກາດດຽວກັນ, ທ່ານ ພິຕ ໜູຈອນ ກ້ອນທອງດຳ ຮອງລັດຖະມົນຕີ ກະຊວງ ປກສ ໄດ້ໃຫ້ຮູ້ອີກວ່າ: ໄຂ້ຫວັດໃຫຍ່ຕາມລະດູການ ເປັນພະຍາດຕິດຕໍ່ທາງລະບົບຫາຍໃຈ ທີ່ສາມາດແຜ່ລະບາດໃນຊຸມຊົນ ແລະ ພາຍໃນກົມກອງໄດ້, ການສັກຢາວັກຊີນປ້ອງກັນເປັນມາດຕາການທີ່ສຳຄັນໜຶ່ງ ໃນການຫລຸດຜ່ອນຄວາມສ່ຽງຕໍ່ການເຈັບປ່ວຍ ແລະ ຫລຸດອາການຮຸນແຮງເມື່ອເວລາຕິດພະຍາດ. ຄຽງຄູ່ກັນນັ້ນ, ພວກເຮົາຕ້ອງໄດ້ເອົາໃຈໃສ່ຮັກສາອະນາໄມ, ລ້າງມືເປັນປະຈຳ, ໃສ່ຜ້າປິດປາກ-ດັງໃນເວລາໄອຈາມ ການປົກປ້ອງສຸຂະພາບໃຫ້ແກ່ພະນັກງານນັກຮົບ, ນາຍ ແລະ ພົນຕຳຫລວດ ແມ່ນໜຶ່ງໃນບັນດາວຽກງານທີ່ສຳຄັນເພາະວ່າຖ້າກຳລັງພົນ (ນາຍ ແລະ ພົນຕຳຫລວດ) ມີສຸຂະພາບແຂງແຮງດີ ຍ່ອມເປັນພື້ນຖານສຳຄັນໃຫ້ແກ່ການປະຕິບັດໜ້າທີ່ວຽກງານວິຊາສະເພາະ ຮັກສາຄວາມສະຫງົບ ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮັບໃຊ້ປະຊາຊົນ ໄດ້ຢ່າງມີປະສິດທິຜົນ.

ຂ່າວ: ສິດທິພັນ

ຂ່າວພາຍໃນ · 11:02 ໂມງ · ອ່ານ 2 ຄັ້ງ

ທຳລາຍສິນຄ້າທີ່ນຳເຂົ້າບໍ່ຖືກຕ້ອງ ເບຍຫວຽດ ແລະ ສິນຄ້າລວມມູນຄ່າ 164 ກວ່າລ້ານກີບ



ວັນທີ 29 ຕຸລາ 2026 ຢູ່ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງເຊໂປນ ແຂວງສະຫວັນນະເຂດ, ໄດ້ຈັດພິທີທຳລາຍສິນຄ້າທີ່ນຳເຂົ້າບໍ່ຖືກຕ້ອງ ແລະ ໝົດອາຍຸການນຳໃຊ້.

ສິນຄ້າທີ່ນຳມາທຳລາຍໃນຄັ້ງນີ້, ເຈົ້າໜ້າທີ່ກວດກາການຄ້າຂັ້ນເມືອງໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ, ຍຶດໄດ້ຈາກການລັກລອບນຳເຂົ້າສິນຄ້າສ່ວນຫລາຍແມ່ນນຳເຂົ້າມາໂດຍຜ່ານດ່ານປະເພນີ, ເສັ້ນທາງນ້ຳ, ຊ່ອງທາງທຳມະຊາດ ບາງສ່ວນກໍຜ່ານດ່ານສາກົນ ແລ້ວນຳມາກະຈາຍລົງຕາມທາງຮ້ານຂາຍສົ່ງ, ຂາຍຍ່ອຍ.


ຮູບແບບການຍຶດສິ່ງແມ່ນນຳໃຊ້ລົດຈັກ, ລໍ້, ລົດໂດຍສານ ແລະ ລົດໃຫຍ່ປະເພດຕ່າງໆ ໂດຍນຳໃຊ້ເສັ້ນທາງເລກ 9 ເປັນຫຼັກໃນການຈໍລະຈອນສິນຄ້າ ແລະ ເຄື່ອງທີ່ຍຶດໄດ້ມີປະເພດເບຍໄຊ່ງ່ອນ 45 ແກັດ, ເບຍສະຕີນ 16 ແກັດ, ເບຍໄຮນີເກັ້ນ-ຄີງເກັ້ນ 16 ແກັດ, ເບຍຮຸດາ 14 ແກັດ, ກະເທິງແດງ 46 ແຟັກ ນ້ຳ ຫວານຕຸກໃຫຍ່ 16 ແກັດ, ນ້ຳຫວານຕຸກນ້ອຍ 169 ຕຸກ ແລະ ອື່ນໆ ລວມມູນຄ່າສິນຄ້າທັງໝົດ 164,453,000 ກີບ.

ທີ່ມາ: ໂຄສະນາເມືອງເຊໂປນ

ຂ່າວຕ່າງປະເທດ

ຂ່າວຕ່າງປະເທດ · 13:00 ໂມງ · ອ່ານ 26 ຄັ້ງ

ອິນເດຍເລັ່ງອົບພະຍົບປະຊາຊົນ ກຽມຮັບມື “ພາຍຸມູຣຊູ” ໄຊໂຄລນລູກທີ 2 ພາຍໃນຮອບ 1 ອາທິດ



ທາງການອິນເດຍເລີ່ມອົບພະຍົບປະຊາຊົນຕາມແນວຊາຍຝັ່ງທະເລດ້ານຕາເວັນອອກ ຕັ້ງແຕ່ວັນທີ 2 ພະຈິກ ເພື່ອກຽມຮັບມືກັບພາຍຸໄຊໂຄລນ “ມຸຣຊູ” (Murzu) ເຊິ່ງຄາດວ່າຈະພັດຂຶ້ນຝັ່ງໃນຊ່ວງເຊົ້າມືດຂອງວັນທີ 3 ພະຈິກ. ຂະນະທີ່ພື້ນທີ່ດັ່ງກ່າວຍັງຢູ່ໃນຊ່ວງຟື້ນຟູຄວາມເສຍຫາຍຈາກພາຍຸໄຊໂຄລນ “ອານັບ” (Arnab) ທີ່ພັດຖະຫຼົ່ມເມື່ອອາທິດຜ່ານມາ ແລະ ເຮັດໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 6 ຄົນ.

ກົມອຸຕຸນິຍົມວິທະຍາອິນເດຍ (IMD) ລະບຸວ່າ ພາຍຸມຸຣຊູເລີ່ມກໍ່ຕົວຈາກບໍລິເວນຄວາມກົດອາກາດຕ່ຳກຳລັງແຮງໃນບໍລິເວນອ່າວເບັງກອນຕອນໃຕ້ ແລະ ຕອນກາງຄ່ອນໄປທາງຕາເວັນຕົກ ກ່ອນຈະທະວີກຳລັງຂຶ້ນເປັນພາຍຸໄຊໂຄລນ ໂດຍຄາດວ່າຈະເຄື່ອນຕົວຂຶ້ນຝັ່ງລັດອານທະຣະປຣາເທດ ໃນຊ່ວງເຊົ້າມືດຂອງວັນທີ 3 ພະຈິກ.

ພາຍຸອາດທະວີກຳລັງຂຶ້ນເປັນພາຍຸໄຊໂຄລນຮຸນແຮງຫຼາຍ ໂດຍມີຄວາມໄວລົມ 100-110 ກິໂລແມັດຕໍ່ຊົ່ວໂມງ ແລະ ລົມກະໂຊກແຮງສຸດເຖິງ 120 ກິໂລແມັດຕໍ່ຊົ່ວໂມງ. ໂດຍຄາດວ່າພື້ນທີ່ຊາຍຝັ່ງຂອງລັດອານທະຣະປຣາເທດ ແລະ ລັດທະມິນນາດຸ ທາງຕາເວັນອອກສຽງໃຕ້ຂອງອິນເດຍ ຈະເປັນພື້ນທີ່ທີ່ໄດ້ຮັບຜົນກະທົບໜັກທີ່ສຸດ.

ທ່ານ ປຣາຄາ ເຊນ (Prakhar Jain) ຜູ້ອຳນວຍການສຳນັກງານຈັດການໄພພິບັດລັດອານທະຣະປຣາເທດ ໃຫ້ສຳພາດກັບສຳນັກຂ່າວ Reuters ວ່າ ຂະນະນີ້ມີປະຊາຊົນປະມານ 2,000 ຄົນ ໄດ້ອົບພະຍົບໄປຍັງພື້ນທີ່ປອດໄພແລ້ວ ແລະ ກຳລັງດຳເນີນການອົບພະຍົບຢ່າງຕໍ່ເນື່ອງ ໂດຍຕັ້ງເປົ້າໝາຍອົບພະຍົບປະຊາຊົນປະມານ 30,000 ຄົນ ໄປຍັງສະຖານທີ່ປອດໄພ.

ຂໍ້ມູນຈາກສຳນັກງານຈັດການໄພພິບັດລັດອານທະຣະປຣາເທດ ລະບຸວ່າ ຈຸດທີ່ຄາດວ່າພາຍຸຈະພັດຂຶ້ນຝັ່ງແມ່ນບໍລິເວນເມືອງອອງໂກເລ (Ongole).

ທາງການໄດ້ຈັດກຳລັງເຈົ້າໜ້າທີ່ຮັບມືໄພພິບັດແຫ່ງຊາດ (NDRF) ຈຳນວນ 6 ທີມ ແລະ ເຈົ້າໜ້າທີ່ຮັບມືໄພພິບັດລະດັບລັດ (SDRF) ອີກ 7 ທີມ

ຕໍ່ໜ້າ 6

ອິນເດຍເລັ່ງອົບພະຍົບປະຊາຊົນ ກຽມຮັບມື “ພາຍຸມູຣຊູ” ໄຊໂຄລ... (ຕໍ່ຈາກໜ້າ 5)

ກະຈາຍກຳລັງຢູ່ຕາມເຂດສ່ຽງ ລວມທັງ ເຂດ Krishna, Bapatla, Guntur, Nellore, Prakasam, Markapuram, Palnadu ແລະ Tirupati ພ້ອມທັງກຽມກຳລັງເສີມ ເພີ່ມເຕີມຫາກຈຳເປັນ.

ດ້ານລັດໂອດິຊາ (Odisha) ເຊິ່ງ ມີຊາຍແດນຕິດກັບລັດອານທະຣະປຣາ ເທດ ຍັງຄົງດຳເນີນພາລະກິດຊ່ວຍເຫຼືອ ແລະ ຟື້ນຟູຄວາມເສຍຫາຍຈາກພາຍຸໄຊ ໂຄລນ “ອານັບ” (Arnab).

ຍອດຜູ້ເສຍຊີວິດເພີ່ມຂຶ້ນເປັນ 6 ຄົນ ຫຼັງຈາກເຈົ້າໜ້າທີ່ພົບສົບອີກ 2 ລາຍ ໃນບ້ານທີ່ໄດ້ຮັບຜົນກະທົບຈາກດິນຖະ ຫຼົ່ມ. ຂະນະທີ່ຍັງມີຜູ້ສູນຫາຍອີກ 10 ຄົນ.

ພາຍຸໄຊໂຄລນອານັບສ້າງຄວາມ ເສຍຫາຍໜັກໃນອິນເດຍ ປະຊາຊົນຫຼາຍ ແສນຄົນໄດ້ຮັບຜົນກະທົບ ຂະນະທີ່ ທາງການເລັ່ງກຽມຮັບມືພາຍຸມູຣຊູ

ເຈົ້າໜ້າທີ່ລະບຸວ່າ ບ້ານກິດິປາບາລີ (Gidipabali) ເຊິ່ງຕັ້ງຢູ່ເທິງເນີນພູ ບໍລິເວນຊາຍແດນລະຫວ່າງເຂດກັນຊຳ (Ganjam) ແລະ ກັນທະມາລ (Kandhamal) ມີປະຊາຊົນອາໄສຢູ່ ປະມານ 26 ຄົນ. ແຕ່ຖືກດິນໂຄລນ ແລະ ເສດຊາກຈາກພູເຂົາຖະຫຼົ່ມລົງມາ ທັບເຮືອນຊານ ຈົນເສຍຫາຍທັງໝົດ. ຂະນະທີ່ຜູ້ລອດຊີວິດຢ່າງໜ້ອຍ 13 ຄົນ ໄດ້ຮັບການອົບພະຍົບໄປພັກຢູ່ສູນ ຊ່ວຍເຫຼືອແລ້ວ.

ເຈົ້າໜ້າທີ່ພິເສດດ້ານການບັນເທົາ ທຸກຂອງລັດໂອດິຊາ (Odisha) ເປີດເຜີຍວ່າ ພາຍຸໄຊໂຄລນອານັບ (Arnab) ແລະ ນ້ຳຖ້ວມທີ່ເກີດຂຶ້ນຕາມ ມາ ສົ່ງຜົນກະທົບຕໍ່ປະຊາຊົນປະມານ 118,000 ຄົນ, ພື້ນທີ່ກະສິກຳເສຍຫາຍ 75,388 ເຮັກຕາ ແລະ ເຮືອນຢູ່ອາໄສ 1,672 ຫຼັງ. ໂດຍເຂດກັນຊຳ ແລະ ກັນ ທະມາລ ເປັນສອງພື້ນທີ່ທີ່ໄດ້ຮັບຜົນ ກະທົບໜັກທີ່ສຸດ.

ຂະນະດຽວກັນ ລັດໂອດິຊາກຳລັງ ເລັ່ງຟື້ນຟູລະບົບໄຟຟ້າໃນເຂດປະສົບໄພ ໂດຍລະດົມເຈົ້າໜ້າທີ່ຫຼາຍກວ່າ 6,400 ຄົນ ພ້ອມດຳເນີນການຊ່ວຍເຫຼືອປະຊາຊົນ ແລະ ກຽມຮັບມືກັບພາຍຸມຸຣຊູ (Murzu) ທີ່ກຳລັງຈະເຂົ້າມາ.

ລັດຖະບານລັດໂອດິຊາຍັງໄດ້ປະ ກາດມາດຕະການຊ່ວຍເຫຼືອຄອບຄົວທີ່ໄດ້ ຮັບຜົນກະທົບຈາກນ້ຳຖ້ວມ ໂດຍແຕ່ລະ ຄອບຄົວໃນເຂດພາກໃຕ້ຈະໄດ້ຮັບ:

ເຂົ້າສານ 50 ກິໂລກຣາມ.

ເງິນຊ່ວຍເຫຼືອ 2,500 ຣູປີອິນເດຍ ຫຼື ປະມານ 900 ບາດ.

ເງິນຊົດເຊີຍຄວາມເສຍຫາຍດ້ານ ພືດຜົນການກະເສດ, ເຮືອນຊານ ແລະ ແຫຼ່ງປະກອບອາຊີບ.

ທ່ານ ໂມຮັນ ຈະຣັນ ມາຈີ (Mohan Charan Majhi) ນຸກຂະ ມົນຕີລັດໂອດິຊາ ກ່າວວ່າ ລັດຖະບານໄດ້ ຍົກລະດັບມາດຕະການກຽມພ້ອມຮັບມື ກັບພາຍຸລູກໃໝ່ ພ້ອມສັ່ງອົບພະຍົບ ປະຊາຊົນອອກຈາກພື້ນທີ່ລຸ່ມຕ່ຳ ແລະ ເຂດພູເຂົາທີ່ມີຄວາມສ່ຽງ.

ນອກຈາກນີ້ ຍັງປະກາດປິດ ໂຮງຮຽນ ແລະ ວິທະຍາໄລບາງແຫ່ງໃນ ເຂດພາກໃຕ້ ຈົນເຖິງວັນທີ 3 ພະຈິກ.

ພ້ອມກັນນັ້ນ ທາງການຍັງປະກາດ ເຕືອນໄພລະດັບສູງໃນພື້ນທີ່ພາກໃຕ້ຂອງ ລັດ ໂດຍສະເພາະເຂດກັນຊຳ ເຊິ່ງເປັນ ເຂດທີ່ເສຍຫາຍໜັກຈາກພາຍຸໄຊໂຄລນອາ ນັບ. ພ້ອມສັ່ງຫ້າມຊາວປະມົງອອກທະເລ ແລະ ຈັດກຳລັງໜ່ວຍງານຮັບມືໄພພິບັດ ໃຫ້ຢູ່ໃນສະພາບພ້ອມປະຕິບັດງານ ຕະຫຼອດເວລາ.

ກົມອຸຕຸນິຍົມວິທະຍາອິນເດຍ ຄາດການວ່າ ລັດໂອດິຊາຈະເລີ່ມມີຝົນຕົກ ຕັ້ງແຕ່ວັນທີ 2 ພະຈິກ ແລະ ຝົນຈະຕົກ ໜັກຂຶ້ນໃນວັນທີ 3 ພະຈິກ ຕໍ່ເນື່ອງໄປ ຈົນເຖິງວັນທີ 4 ພະຈິກ ຈາກອິດທິພົນ ຂອງພາຍຸມຸຣຊູ.

ທັງນີ້ ຊື່ “ມູຣຊູ” (Murzu) ມີ ຄວາມໝາຍວ່າ “ກອງເສິກ” ໃນພາສາທະ ມິນ ເຊິ່ງເປັນຊື່ທີ່ອິນເດຍສະເໜີໃຫ້ໃຊ້ ເອີ້ນພາຍຸລູກນີ້.

ຂະນະນີ້ ລັດຖະບານອິນເດຍ ແລະ ໜ່ວຍງານທ້ອງຖິ່ນ ຍັງຄົງຕິດຕາມ ສະຖານະການຢ່າງໃກ້ຊິດ ເພື່ອປ້ອງກັນ ການສູນເສຍຊີວິດ ແລະ ຫຼຸດຜ່ອນຜົນ ກະທົບຕໍ່ປະຊາຊົນໃນພື້ນທີ່ສ່ຽງ.

ທີ່ມາ: The Hindu / NDTV / Hindustan Times

ข่าวต่างประเทศ · 13:19 โมง · อ่าน 24 ครั้ง

นักวิทยาศาสตร์เตือน! โลกกำลังเผชิญความเสี่ยงร้ายแรง หลังน้ำท้องขั้วโลกละลายไวขึ้น 6 เท่า



กรีนแลนด์ และ แอนตาร์กติกา สูญเสียมวลน้ำท้องรวมกันเกือบ 6.4 พันตันต่อปี ในช่วง 3 ทศวรรษที่ผ่านมา. ถ้าอัตราการละลายยังสืบต่อโดยบ่มีการควบคุม อาจเร่งให้เกิดน้ำท่วมที่สั่งผลกระทบต่อประชาชนหลายร้อยล้านคนภายในปี 2100.

กรีนแลนด์ และ แอนตาร์กติกา กำลังละลายไวขึ้น 6 เท่า เมื่อเทียบกับช่วงทศวรรษ 1990.(NASA)

ผลการสังเกตจากดาวเทียม 11 ภารกิจ ที่ใช้ติดตามแผ่นน้ำท้องในกรีนแลนด์ และ แอนตาร์กติกา พบว่า ทั้งสองภาคพื้นกำลังสูญเสียน้ำท้องไวขึ้น 6 เท่า เมื่อเทียบกับช่วงทศวรรษ 1990.

ถ้าแนวโน้มการละลายในปัจจุบันยังสืบต่อ ระดับน้ำทะเลอาจสูงขึ้นอีก 6.7 นิ้ว (17 ซังติเมตร) ภายในปี 2100 เซิ่ง เป็นไปตามสถานะการร้ายแรงที่สุด ที่คาดคะเนโดยคณะกรรมการ ระหว่างรัฐบาลว่าด้วยการเปลี่ยนแปลง สภาพภูมิอากาศ (IPCC).

ผลการศึกษานี้ได้รับการ เผยแพร่ทางออนไลน์ในวันที่ 12 มีนา ในวารสาร Nature โดยคณะนักวิทยาศาสตร์โลกสากล 89 คน จาก 50 องค์กร. ถือเป็นการประเมินการเปลี่ยนแปลงของแผ่นน้ำท้องที่ครอบคลุมทั่วด้านที่ละเอียดถี่ถ้วนที่สุดในขณะนั้น.

คณะวิจัยได้นำผลการสำรวจ 26 ชุดมาประสมประสานกัน เพื่อคำนวณการเปลี่ยนแปลงมวลน้ำท้องของกรีนแลนด์ และ แอนตาร์กติกา ในช่วงปี 1992-2018.

การประเมินนี้ได้รับการสนับสนุนจากองค์การ NASA และ องค์การอวกาศยุโรป (ESA) โดยอาศัยข้อมูลจากดาวเทียมหลายดวง รวมทั้งดาวเทียมสำรวจความสูงของพื้นผิวน้ำท้อง และดาวเทียมที่ร่วมมือกันระหว่าง NASA กับสวนอวกาศ

ต่อหน้า 7

ນັກວິທະຍາສາດເຕືອນ! ໂລກກຳລັງປະເຊີນຄວາມສ່ຽງຮ້າຍແຮງ ... (ຕໍ່ຈາກໜ້າ 6)

ເຢຍລະມັນ.

ແອນດຣູ ເຊບເພີດ (Andrew Shepherd) ຈາກມະຫາວິທະຍາໄລລີດສ ປະເທດອັງກິດ ແລະ ເອຣິກ ອີວິນສ (Erik Ivins) ຈາກຫ້ອງທົດລອງ Jet Propulsion Laboratory ຂອງ NASA ໃນລັດຄາລິຟໍເນຍ ເປັນຜູ້ນຳການສຶກສາຄັ້ງນີ້.

ຜົນການຄຳນວນພົບວ່າ ໃນຊ່ວງທົດສະວັດ 1990 ແຜ່ນນ້ຳກ້ອນທັງສອງແຫ່ງສູນເສຍນ້ຳກ້ອນລວມກັນປະມານ 81 ຕຣິໂຕນຕໍ່ປີ. ແຕ່ໃນຊ່ວງທົດສະວັດ 2010 ຕົວເລກນີ້ເພີ່ມຂຶ້ນເປັນ 475 ຕຣິໂຕນຕໍ່ປີ ຫຼືເພີ່ມຂຶ້ນ 6 ເທົ່າ.

ໂດຍລວມແລ້ວ ກຣີນແລນ ແລະ ແອນຕາກຕິກາ ສູນເສຍນ້ຳກ້ອນໄປແລ້ວ ເຖິງ 6.4 ພັນຕຣິໂຕນ ນັບຕັ້ງແຕ່ຊ່ວງທົດສະວັດ 1990.

ນ້ຳກ້ອນທີ່ລະລາຍກາຍເປັນນ້ຳ ສົ່ງຜົນໃຫ້ລະດັບນ້ຳທະເລທົ່ວໂລກສູງຂຶ້ນ 0.7 ນິ້ວ (17.8 ມິນລິແມັດ). ການລະລາຍຂອງແຜ່ນນ້ຳກ້ອນຂົ້ວໂລກທັງສອງແຫ່ງ ເປັນສາເຫດປະມານ 1 ໃນ 3 ຂອງການເພີ່ມຂຶ້ນຂອງລະດັບນ້ຳທະເລທັງໝົດ. ໃນນັ້ນ 60% ເກີດຈາກການສູນເສຍນ້ຳກ້ອນໃນກຣີນແລນ ແລະອີກ 40% ເກີດຈາກແອນຕາກຕິກາ.

ທ່ານ ອີວິນສ ກ່າວວ່າ:

"ການສັງເກດນ້ຳກ້ອນບໍລິເວນຂົ້ວໂລກຜ່ານດາວທຽມ ມີຄວາມສຳຄັນຢ່າງຍິ່ງຕໍ່ການຕິດຕາມ ແລະຄາດຄະເນວ່າ ການປ່ຽນແປງສະພາບພູມອາກາດຈະສົ່ງຜົນຕໍ່ການສູນເສຍນ້ຳກ້ອນ ແລະການເພີ່ມຂຶ້ນຂອງລະດັບນ້ຳທະເລແນວໃດ. ເຖິງແມ່ນວ່າແບບຈຳລອງຄອມພິວເຕີຈະຊ່ວຍໃຫ້ພວກເຮົາຄາດຄະເນອະນາຄົດໄດ້ ແຕ່ຂໍ້ມູນການວັດແທກຈາກດາວທຽມແມ່ນຫຼັກຖານໂດຍກົງທີ່ໜ້າເຊື່ອຖືຢ່າງຍິ່ງ."

ໃນປີ 2014 IPCC ໄດ້ເຜີຍແຜ່ລາຍງານປະເມີນຄັ້ງທີ 5 ໂດຍຄາດຄະເນວ່າ ລະດັບນ້ຳທະເລທົ່ວໂລກອາດສູງຂຶ້ນ 28 ນິ້ວ (71 ຊັງຕິແມັດ) ພາຍໃນປີ 2100. ຜົນການສຶກສາຂອງຄະນະວິໄຈຄັ້ງນີ້ພົບວ່າ ການສູນເສຍນ້ຳກ້ອນໃນກຣີນແລນ ແລະແອນຕາກຕິກາ ມີແນວໂນ້ມສອດຄ່ອງກັບສະຖານະການຮ້າຍແຮງທີ່ສຸດຂອງ IPCC.

ການສູນເສຍນ້ຳກ້ອນລວມຈາກທັງສອງແຜ່ນນ້ຳກ້ອນ ເຄີຍສູງສຸດເຖິງ 552 ຕຣິໂຕນຕໍ່ປີໃນປີ 2010 ແລະມີຄ່າສະເລ່ຍ 475 ຕຣິໂຕນຕໍ່ປີ ໃນຊ່ວງທີ່ເຫຼືອຂອງທົດສະວັດນັ້ນ.

ການສູນເສຍນ້ຳກ້ອນທີ່ສູງສຸດນີ້ ເກີດຂຶ້ນພ້ອມກັບຫຼາຍປີທີ່ກຣີນແລນມີການລະລາຍຂອງນ້ຳກ້ອນຢູ່ພື້ນຜິວຢ່າງຮຸນແຮງ. ສ່ວນຄື້ນຄວາມຮ້ອນໃນເຂດອາກຕິກໃນລະດູຮ້ອນຂອງປີ 2019 ກໍມີແນວໂນ້ມວ່າ ຈະເຮັດໃຫ້ການສູນເສຍນ້ຳກ້ອນຂົ້ວໂລກໃນປີນັ້ນສ້າງສະຖິຕິໃໝ່ ແຕ່ຍັງຕ້ອງມີການວິເຄາະເພີ່ມເຕີມ.

ການຄາດຄະເນຂອງ IPCC ຊີ້ວ່າ ການເພີ່ມຂຶ້ນຂອງລະດັບນ້ຳທະເລອາດເຮັດໃຫ້ປະຊາຊົນເຖິງ 400 ລ້ານຄົນ ຕົກຢູ່ໃນຄວາມສ່ຽງຈາກນ້ຳຖ້ວມຊາຍຝັ່ງເປັນປະຈຳພາຍໃນທ້າຍສະຕະວັດນີ້.

ທ່ານ ເຊບເພີດ ກ່າວວ່າ:

"ທຸກໆ 1 ຊັງຕິແມັດທີ່ລະດັບນ້ຳທະເລສູງຂຶ້ນ ລ້ວນເພີ່ມຄວາມສ່ຽງຕໍ່ນ້ຳຖ້ວມ ແລະການກັດເຊາะຊາຍຝັ່ງ ເຊິ່ງສົ່ງຜົນລົບກວນຕໍ່ຊີວິດຂອງຜູ້ຄົນທົ່ວໂລກ."

ສຳລັບສາເຫດທີ່ເຮັດໃຫ້ນ້ຳກ້ອນສູນເສຍໄປນັ້ນ ພົບວ່າ ທະເລກຳລັງລະລາຍທາງດ້ານລຸ່ມຂອງທາລະນ້ຳກ້ອນທີ່ໄຫຼລົງສູ່ທະເລໃນແອນຕາກຕິກາ ເຮັດໃຫ້ທາລະນ້ຳກ້ອນເຫຼົ່ານັ້ນເຄື່ອນຕົວໄວຂຶ້ນ.

ສ່ວນກຣີນແລນ ການລະລາຍຈາກນ້ຳທະເລເປັນສາເຫດປະມານເຄິ່ງໜຶ່ງຂອງການສູນເສຍນ້ຳກ້ອນ ຂະນະທີ່ອີກເຄິ່ງໜຶ່ງເກີດຈາກອຸນຫະພູມອາກາດທີ່ສູງຂຶ້ນ ເຮັດໃຫ້ນ້ຳກ້ອນຢູ່ພື້ນຜິວລະລາຍ.

ທີ່ມາ: (NASA)

◆ **ຂ່າວຕ່າງປະເທດ** · 10:05 ໂມງ · ອ່ານ 16 ຄັ້ງ

ມ້ອບຝຣັ່ງເສດປະທະກັນຢ່າງດຸເດືອດໃຈກາງປາຣີ ໃຊ້ທັງລະເບີດເພີງ ແລະ ແກ๊ສນ້ຳຕາ



ການຊຸມນຸມປະທ້ວງບັນຫາຄ່າຄອງຊີບ ແລະ ການສຶກສາ ໃນຝຣັ່ງເສດ ລຸກລາມກາຍເປັນເຫດປະທະກັນຢ່າງຮຸນແຮງ ໃນນະຄອນຫຼວງປາຣີ. ຜູ້ປະທ້ວງໄດ້ປາລະເບີດເພີງ ຫຼັງຈາກນັ້ນຕຳຫຼວດໄດ້ຕອບໂຕ້ດ້ວຍແກ๊ສນ້ຳຕາ ພ້ອມທັງລະດົມກຳລັງຕຳຫຼວດ 7 ໝື່ນນາຍເພື່ອຮັບມືກັບຄວາມວຸ້ນວາຍ.

ສະຖານະການປະທ້ວງໃນຝຣັ່ງເສດ ຕຶງຄຽດຂຶ້ນຕື່ມອີກ ເມື່ອຄືນວັນເສົາຜ່ານມາ ຫຼັງຈາກການຊຸມນຸມຢ່າງສະຫງົບໃນນະຄອນຫຼວງປາຣີ ໄດ້ຍົກລະດັບກາຍເປັນເຫດປະທະກັນຢ່າງຮຸນແຮງ ເຊິ່ງຖືເປັນການປະທ້ວງຕໍ່ເນື່ອງເປັນສັບປະດາທີ 3 ທ່າມກາງຄວາມບໍ່ພໍໃຈຂອງປະຊາຊົນຕໍ່ກັບບັນຫາຄ່າຄອງຊີບ ແລະ ການສຶກສາ.

ລັດຖະບານຝຣັ່ງເສດປະເມີນວ່າ ມີປະຊາຊົນເຂົ້າຮ່ວມການຊຸມນຸມທົ່ວປະເທດປະມານ 320,000 ຄົນ, ໃນຂະນະທີ່ທາງການໄດ້ລະດົມກຳລັງຕຳຫຼວດປະມານ 70,000 ນາຍທົ່ວປະເທດ ເພື່ອຮັກສາຄວາມປອດໄພ ແລະ ຄວບຄຸມສະຖານະການ ໂດຍມີການປ່ຽນເສັ້ນທາງການເດີນຂະບວນໃນນະຄອນຫຼວງປາຣີ

ຕໍ່ໜ້າ 8

ມ້ອບຝຣັ່ງເສດປະທະກັນຢ່າງດຸເດືອດໃຈກາງປາຣີ ໃຊ້ທັງລະເບີດ... (ຕໍ່ຈາກໜ້າ 7)

ໃຫ້ອອກໄປຍັງເຂດນອກເມືອງ.

ການຊຸມນຸມເລີ່ມບານປາຍຂຶ້ນ ເມື່ອກຸ່ມຜູ້ປະທ້ວງໄດ້ຂວາງລະເບີດເພີງໃສ່ເຈົ້າໜ້າທີ່ ຈົນເຮັດໃຫ້ມີຕຳຫຼວດຖືກໄຟໄໝ້ຂາ ກ່ອນທີ່ຕຳຫຼວດຈະຕອບໂຕ້ດ້ວຍແກັສນ້ຳຕາ ສິ່ງຜົນໃຫ້ມີຜູ້ບາດເຈັບເປັນຈຳນວນຫຼາຍ ໂດຍໄວຍະການຝຣັ່ງເສດຈະມີການຕັ້ງຂໍ້ຫາພະຍາຍາມຄາດຕະກຳ ກັບຜູ້ທີ່ກໍ່ເຫດດັ່ງກ່າວອີກດ້ວຍ.

ກ່ອນໜ້ານີ້, ທ່ານ ໂລຣ້ຳ ນູເນສ (Laurent Nuñez) ລັດຖະມົນຕີກະຊວງພາຍໃນຂອງຝຣັ່ງເສດ ໄດ້ເຕືອນວ່າ ການຊຸມນຸມມີຄວາມສ່ຽງສູງທີ່ຈະເກີດເຫດວຸ້ນວາຍ ໂດຍສະເພາະແມ່ນຫຼັງຄືນວັນຮາໂລວີນ (Halloween) ເຊິ່ງເຈົ້າໜ້າທີ່ຕ້ອງໄດ້ຕິດຕາມເຝົ້າລະວັງສະຖານະການຢ່າງໃກ້ຊິດ.


ການປະທ້ວງໄດ້ເລີ່ມຂຶ້ນໃນເດືອນຜ່ານມາ ໂດຍມີນັກຮຽນລະດັບມັດທະຍົມສຶກສາເປັນກຸ່ມທຳອິດທີ່ອອກມາເຄື່ອນໄຫວ ກ່ອນທີ່ຈະຂະຫຍາຍວົງກວ້າງໄປເຖິງສະຫະພັນກຳມະບານ ແລະ ປະຊາຊົນກຸ່ມອື່ນໆ ທີ່ບໍ່ພໍໃຈຕໍ່ບັນຫາຄ່າຄອງຊີບ ແລະ ການສຶກສາ.

ໃນຂະນະດຽວກັນ, ເຢຍລະມັນ ແລະ ອິຕາລີ ກໍພົບເຈີກັບການປະທ້ວງທີ່ນຳໂດຍເຍາວະຊົນເຊັ່ນດຽວກັນ ໂດຍຜູ້ຊຸມນຸມໄດ້ຮຽກຮ້ອງໃຫ້ລັດຖະບານເລັ່ງແກ້ໄຂບັນຫາດ້ານການສຶກສາ, ສາທາລະນະສຸກ, ການປົກປັກຮັກສາສະພາບພູມອາກາດ ແລະ ຄ່າຄອງຊີບ ເພື່ອໃຫ້ປະຊາຊົນສາມາດດຳລົງຊີວິດໄດ້ໂດຍບໍ່ຕ້ອງແບກຮັບພາລະຄ່າໃຊ້ຈ່າຍທີ່ສູງເກີນໄປ.

ທີ່ມາ: BBC

◆ ຂ່າວຕ່າງປະເທດ · 16:29 ໂມງ · ອ່ານ 12 ຄັ້ງ

ຈັບໂຕຊາຍຄົນລາວ ຕາມໝາຍຈັບຄະດີຟອກເງິນ ມີການລົງທຶນ ຄຣິບໂຕ ແລະ ຟໍເຣັກ



ຕຳຫຼວດກວດຄົນເຂົ້າເມືອງຈັງຫວັດໜອງຄາຍ (ตม.ໜອງคาย) ຈັບກຸມຊາຍຊາວລາວ ຜູ້ຈັດການໂຄງການກໍ່ສ້າງສະຖານທີ່ລາຊະການຂອງໜ່ວຍງານລັດໃນ ສປປ ລາວ ຫຼັງຖືກສານອາຍາອອກໝາຍຈັບໃນຂໍ້ຫາຮ່ວມກັນຟອກເງິນ ແລະສົມຄົບກັນຕັ້ງແຕ່ 2 ຄົນຂຶ້ນໄປເພື່ອກະທຳຄວາມຜິດຖານຟອກເງິນ ໂດຍມີການກະທຳຄວາມຜິດຖານຟອກເງິນເກີດຂຶ້ນຈາກການສົມຄົບດັ່ງກ່າວ.

ວັນທີ 2 ພະຈິກ 2026 ພັນຕຳຫຼວດເອກ ນິບພະດົນ ຮັກຊາດ ຜູ້ກຳກັບການຕຳຫຼວດກວດຄົນເຂົ້າເມືອງຈັງຫວັດໜອງຄາຍ, ພັນຕຳຫຼວດໂທ ທິຍາພັດ ຣັງສິພຣາມະນະກຸນ ຮອງຜູ້ກຳກັບການ ແລະພັນຕຳຫຼວດໂທ ອະພິຊາດ ຄົນທາ ສາລະວັດ ພ້ອມດ້ວຍເຈົ້າໜ້າທີ່ ตม.ໜອງคาย ພາຍໃຕ້ນະໂຍບາຍຂອງ ພົນຕຳຫຼວດເອກ ສຳລານ ນວນມາ ຜູ້ບັນຊາການຕຳຫຼວດແຫ່ງຊາດໄທ ແລະ ການອຳນວຍການຂອງບັນດາຜູ້ບັນຊາການລະດັບສູງຂອງສຳນັກງານຕຳຫຼວດກວດຄົນເຂົ້າເມືອງ ໄດ້ຈັບກຸມ MR. DARAVIENG CHANTHALANGSY ສັນຊາດລາວ ອາຍຸ 46 ປີ ປະຊາຊົນບ້ານໜອງບົວທອງ ເມືອງສີໂຄດຕະບອງ ແຂວງວຽງຈັນ ຕາມໝາຍຈັບສານອາຍາເລກທີ 5679/2569 ລົງວັນທີ 2 ກັນຍາ 2026 ໃນຂໍ້ຫາຮ່ວມກັນຟອກເງິນ ແລະສົມຄົບກັນຕັ້ງແຕ່ 2 ຄົນຂຶ້ນໄປເພື່ອກະທຳຄວາມຜິດຖານຟອກເງິນ ແລະມີການກະທຳຄວາມຜິດຖານຟອກເງິນເກີດຂຶ້ນຈາກການສົມຄົບດັ່ງກ່າວ.

ພັນຕຳຫຼວດໂທ ທິຍາພັດ ຣັງສິພຣາມະນະກຸນ ຮອງຜູ້ກຳກັບການ ตม.ໜອງคาย ເປີດເຜີຍວ່າ ຈາກການສອບສວນຜູ້ຕ້ອງຫາ ຊາບວ່າປັດຈຸບັນລາວເຮັດວຽກຢູ່ ສປປ ລາວ ໃນຕຳແໜ່ງຜູ້ຈັດການໂຄງການກໍ່ສ້າງສະຖານທີ່ລາຊະການຂອງໜ່ວຍງານຕຳຫຼວດ ໃນແຂວງວຽງຈັນ. ນອກຈາກນັ້ນ ຍັງໄດ້ລົງທຶນຊື້ຂາຍແລກປ່ຽນສະກຸນເງິນໃນ ສປປ ລາວ ໂດຍເຮັດທຸລະກຳແລກປ່ຽນເງິນຕາເພື່ອນຳໄປລົງທຶນຊື້ຂາຍສິນຊັບດິຈິຕອນ (Cryptocurrency) ແລະ ຊື້ຂາຍເງິນຕາຕ່າງປະເທດ (Forex) ຄວບຄູ່ກັນໄປ.

ພ້ອມກັນນີ້ ລາວຍັງກຳລັງຈະລົງທຶນເປັນຕົວແທນນຳສິນຄ້າຜະລິດຕະພັນອາຫານເພື່ອສຸຂະພາບຂອງ ດຣ.ອ່ອຍ ຈາກຈັງຫວັດຊຽງໃໝ່ ໄປຈຳໜ່າຍໃນ ສປປ ລາວ. ໃນວັນທີ 2 ພະຈິກ 2026 ລາວໄດ້ເດີນທາງເຂົ້າມາໃນປະເທດໄທ ເພື່ອຈະເດີນທາງຕໍ່ໄປຍັງຈັງຫວັດຊຽງໃໝ່ ໂດຍຜ່ານຂົວມິດຕະພາບໄທ-ລາວ ແຫ່ງທີ 1 ໃນເຂດເມືອງໜອງຄາຍ ຈັງຫວັດໜອງຄາຍ ກ່ອນຈະຊາບວ່າຕົນເອງມີໝາຍຈັບຂອງສານອາຍາໃນປະເທດໄທ ແລະຖືກຈັບກຸມຕາມໝາຍຈັບດັ່ງກ່າວ.

ພາຍຫຼັງການສອບສວນ ເຈົ້າໜ້າທີ່ຈະຄວບຄຸມຕົວສົ່ງໃຫ້ພະນັກງານສອບສວນ ກອງກຳກັບການ 5 ກອງບັງຄັບການປ້ອງກັນແລະປາບປາມການທຸຈະລິດ (บก.ปปป.) ສຳນັກງານຕຳຫຼວດສອບສວນກາງ (บช.ก.) ເພື່ອດຳເນີນຄະດີຕາມກົດໝາຍຕໍ່ໄປ.

ທີ່ມາ: nongkhainewsonline

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ
ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ


ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ · 11:29 ໂມງ · ອ່ານ 12 ຄັ້ງ

ຣັດເຊຍ-ຢູເຄຣນປັ່ນປ່ວນ! ແອັບພລິເຄຊັນແຈ້ງເຕືອນໄພສຸກເສີນຖືກແຮັກ ສົ່ງຂໍ້ຄວາມເຕືອນປອມ ທັງໄພກຳມັນຕະລັງສີ ແລະ ການໂຈມຕີດ້ວຍອາວຸດນິວເຄຼຍ ສ້າງຄວາມຕື່ນຕົກໃຈໃຫ້ປະຊາຊົນ



ເກີດເຫດການໂຈມຕີທາງໄຊເບີ (Cyberattack) ສ້າງຄວາມປັ່ນປ່ວນໃຫ້ລະບົບແອັບພລິເຄຊັນແຈ້ງເຕືອນໄພສຸກເສີນ ທັງໃນປະເທດຣັດເຊຍ ແລະ ຢູເຄຣນ ໂດຍມີການສົ່ງຂໍ້ຄວາມເຕືອນໄພປອມໄປຫາປະຊາຊົນ ທັງເລື່ອງໄພກຳມັນຕະລັງສີ ແລະ ການໂຈມຕີດ້ວຍອາວຸດນິວເຄຼຍ ຈົນເຮັດໃຫ້ປະຊາຊົນເກີດຄວາມຕື່ນຕົກໃຈ.

ພາບປະກອບ

ສະຖານະການຄວາມຕຶງຄຽດລະຫວ່າງຣັດເຊຍ ແລະ ຢູເຄຣນ ກຳລັງເປັນທີ່ຈັບຕາ ຫຼັງຈາກເກີດເຫດໂຈມຕີທາງໄຊເບີຕໍ່ແອັບພລິເຄຊັນແຈ້ງເຕືອນໄພສຸກເສີນ ຂອງທັງສອງປະເທດ ໃນວັນທີ 1 ພະຈິກທີ່ຜ່ານມາ ເຮັດໃຫ້ມີການສົ່ງຂໍ້ຄວາມແຈ້ງເຕືອນປອມໄປຫາຜູ້ໃຊ້ງານ ສ້າງຄວາມສັບສົນ ແລະ ຄວາມຕື່ນຕົກໃຈໃຫ້ແກ່ປະຊາຊົນ.

ລາຍງານລະບຸວ່າ ຢູເຄຣນເປັນຝ່າຍທຳອິດທີ່ກວດພົບຄວາມຜິດປົກກະຕິ ໂດຍກອງທັບອາກາດຢູເຄຣນ ເປີດເຜີຍວ່າ ກຸງເຄຽບ (Kyiv) ໄດ້ຮັບຂໍ້ຄວາມແຈ້ງເຕືອນໄພກຳມັນຕະລັງສີໃນຊ່ວງໄລຍະໜຶ່ງ.

ຂະນະທີ່ໜ່ວຍຂ່າວກອງກາງຂອງຢູເຄຣນລະບຸວ່າ ແອັບພລິເຄຊັນແຈ້ງເຕືອນໄພທາງອາກາດເກີດຂັດຂ້ອງ ພ້ອມທັງຂໍໃຫ້ປະຊາຊົນກວດສອບຂໍ້ມູນຈາກຊ່ອງທາງອື່ນ ແລະ ຢ່າຕື່ນຕົກໃຈກັບຂໍ້ຄວາມຜິດປົກກະຕິທີ່ປາກົດຂຶ້ນ.

ດ້ານສູນສື່ສານຍຸດທະສາດຂອງຢູເຄຣນ ໄດ້ກ່າວຫາຣັດເຊຍວ່າເປັນຜູ້ຢູ່ເບື້ອງຫຼັງການໂຈມຕີຄັ້ງນີ້ ພ້ອມທັງເຜີຍແຜ່ພາບຂໍ້ຄວາມແຈ້ງເຕືອນທີ່ຜິດປົກກະຕິຜ່ານບັນຊີ X ແລະ ເຕືອນປະຊາຊົນໃຫ້ລະເລີຍຂໍ້ຄວາມປອມທີ່ປາກົດໃນແອັບພລິເຄຊັນ.

ຕໍ່ມາພຽງບໍ່ກີ່ຊົ່ວໂມງ ທາງການຣັດເຊຍກໍລາຍງານວ່າ ແອັບພລິເຄຊັນແຈ້ງເຕືອນໄພສຸກເສີນຂອງປະເທດຖືກແຮັກເຊັ່ນກັນ ໂດຍມີລາຍງານວ່າ ກຸ່ມແຮັກເກີທີ່ເຊື່ອມໂຍງກັບໜ່ວຍປະຕິບັດການດ້ານຂ່າວກອງຂອງຢູເຄຣນ ໄດ້ສົ່ງຂໍ້ຄວາມເຕືອນໄພປອມກ່ຽວກັບການໂຈມຕີດ້ວຍອາວຸດນິວເຄຼຍພາຍໃນຣັດເຊຍ.

ກະຊວງສະຖານະການສຸກເສີນຂອງຣັດເຊຍຢືນຢັນວ່າ ລະບົບແຈ້ງເຕືອນໄພສາທາລະນະຍັງເຮັດວຽກຕາມປົກກະຕິ ປະຊາຊົນຍັງສາມາດຮັບຂ່າວສານຜ່ານສັນຍານໄຊເຣນ ແລະ ລຳໂພງ, ຂໍ້ຄວາມທາງໂທລະສັບ ລວມເຖິງການອອກອາກາດທາງໂທລະພາບ ແລະ ວິທະຍຸ.

ພ້ອມລະບຸວ່າ ແອັບພລິເຄຊັນດັ່ງກ່າວເປັນພຽງຊ່ອງທາງເສີມໃນການໃຫ້ຂໍ້ມູນເທົ່ານັ້ນ ແລະ ເຫດການຖືກແຮັກບໍ່ໄດ້ສົ່ງຜົນກະທົບຕໍ່ລະບົບແຈ້ງເຕືອນໄພຫຼັກ. ຂະນະນີ້ ເຈົ້າໜ້າທີ່ກຳລັງເລັ່ງແກ້ໄຂແອັບພລິເຄຊັນໃຫ້ກັບມາໃຊ້ງານໄດ້ຕາມປົກກະຕິ.

ເຫດການໂຈມຕີທາງໄຊເບີຄັ້ງນີ້ ເກີດຂຶ້ນໃນຊ່ວງເວລາທີ່ອ່ອນໄຫວ ຫຼັງຈາກຣັດເຊຍ ແລະ ຢູເຄຣນ ຫາກໍຕົກລົງຢຸດຍິງຊົ່ວຄາວເປັນເວລາ 6 ມື້ ໃນເມືອງໂອເລສກີ (Oleshky) ເຊິ່ງຢູ່ພາຍໃຕ້ການຍຶດຄອງຂອງຣັດເຊຍມາຕັ້ງແຕ່ປີ 2022.

ການຢຸດຍິງດັ່ງກ່າວສົ່ງຜົນໃຫ້ປະຊາຊົນຫຼາຍຮ້ອຍຄົນສາມາດອົບພະຍົບອອກຈາກພື້ນທີ່ໄດ້ ໂດຍຂໍ້ຕົກລົງນີ້ເກີດຈາກຄວາມພະຍາຍາມປະສານງານຂອງ ນາງ ເມລາເນຍ ທຣຳ (Melania Trump) ສຸພາບສະຕີໝາຍເລກໜຶ່ງຂອງສະຫະລັດฯ ແລະ ສົມເດັດພະສັນຕະປາປາ ເລໂອທີ 14.

ການຢຸດຍິງຄັ້ງນີ້ຖືເປັນຊ່ວງເວລາທີ່ການສູ້ຮົບຢຸດລົງຕິດຕໍ່ກັນຍາວນານທີ່ສຸດນັບຕັ້ງແຕ່ຣັດເຊຍເປີດສາກບຸກໂຈມຕີຄັ້ງໃຫຍ່ຕໍ່ຢູເຄຣນ.

ແນວໃດກໍຕາມ ທັງສອງຝ່າຍຕ່າງກ່າວຫາອີກຝ່າຍວ່າ ໃຊ້ຊ່ວງເວລາຢຸດຍິງເພື່ອເສີມກຳລັງທະຫານໃນແນວໜ້າ ເຮັດໃຫ້ຍັງມີຄວາມສ່ຽງທີ່ການສູ້ຮົບອາດກັບມາປະທຸຂຶ້ນອີກຄັ້ງ.

ທີ່ມາ: BBC

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ · 11:51 ໂມງ · ອ່ານ 10 ຄັ້ງ

ຫວຽດນາມປັບຫຼຸດພາສີ “ນ້ຳມັນແອັດຊັ່ງທຸກປະເພດ” ເຫຼືອ 0% ມີຜົນຍາວເຖິງເດືອນມີນາ 2027



ຫວຽດນາມປະກາດປັບຫຼຸດອັດຕາພາສີຊົ່ວໃຊ້ພິເສດ ສຳລັບນ້ຳມັນແອັດຊັ່ງທຸກປະເພດ ເຫຼືອ 0% ໂດຍມີຜົນຕັ້ງແຕ່ວັນທີ 1 ພະຈິກ 2026 ໄປຈົນເຖິງວັນທີ 31 ມີນາ 2027.

ສຳນັກຂ່າວ VnExpress ລາຍງານໂດຍອ້າງອີງມະຕິໃໝ່ຂອງທາງການຫວຽດນາມ ເມື່ອວັນເສົາ (31 ຕຸລາ) ວ່າ ພາຍໃຕ້ກົດໝາຍພາສີຊົ່ວໃຊ້ພິເສດ ທີ່ມີຜົນບັງຄັບໃຊ້ເມື່ອວັນທີ 1 ກໍລະກົດຂອງປີນີ້ ໄດ້ກຳນົດອັດຕາພາສີໄວ້ທີ່ 10% ສຳລັບນ້ຳມັນແອັດຊັ່ງທົ່ວໄປ, 8% ສຳລັບນ້ຳມັນຊີວະພາບ E5 ແລະ 7% ສຳລັບນ້ຳມັນຊີວະພາບ E10.

ກ່ອນໜ້ານີ້ ລັດຖະບານຫວຽດນາມເຄີຍປັບຫຼຸດພາສີດັ່ງກ່າວເຫຼືອ 0% ມາແລ້ວ ໃນຊ່ວງທ້າຍເດືອນມີນາ ຈົນເຖິງເດືອນມິຖຸນາ 2026 ເພື່ອຊ່ວຍຮັກສາສະຖຽນລະພາບຂອງຕະຫຼາດພາຍໃນປະເທດ.

ຂະນະດຽວກັນ ພາສີສິ່ງແວດລ້ອມສຳລັບຜະລິດຕະພັນນ້ຳມັນແອັດຊັ່ງ ແລະ ນ້ຳມັນເຊື້ອໄຟ ຍັງຄົງເກັບໃນອັດຕາ 0 ດັ່ງ ຫວຽດນາມຕໍ່ລົດ.

ນອກຈາກນີ້ ລາຍງານຍັງລະບຸວ່າ ຜະລິດຕະພັນດັ່ງກ່າວຍັງໄດ້ຮັບການຍົກເວັ້ນການຍື່ນແຈ້ງ ແລະການຊຳລະພາສີມູນຄ່າເພີ່ມ (VAT) ຕາມນະໂຍບາຍທີ່ໄດ້ຂະຫຍາຍໄລຍະເວລາອອກໄປຈົນເຖິງທ້າຍປີ 2026.

ຂ່າວຕ່າງປະເທດ · 14:52 ໂມງ · ອ່ານ 7 ຄັ້ງ

ອາຣບີລ — ຊາອຸດີອາຣະເບຍ ເຫັນດີເບື້ອງຕົ້ນໃນການຟື້ນຟູໂຄງການທໍ່ສົ່ງນ້ຳມັນຮ່ວມກັບອີຣັກ ແຕ່ຈຳເປັນຕ້ອງສ້າງທໍ່ສົ່ງນ້ຳມັນສາຍໃໝ່ ແລະແກ້ໄຂຂໍ້ຂັດແຍ່ງດ້ານກຳມະສິດທີ່ຍັງຄ້າງຄາ



ເມື່ອບໍ່ດົນມານີ້ ຊາອຸດີອາຣະເບຍໄດ້ໃຫ້ການເຫັນດີໃນຫຼັກການຂັ້ນຕົ້ນ ຕໍ່ການຟື້ນຟູໂຄງການທໍ່ສົ່ງນ້ຳມັນເພື່ອການສົ່ງອອກຮ່ວມກັບອີຣັກ ແຕ່ແຜນການນີ້ຈະຕ້ອງມີການກໍ່ສ້າງທໍ່ສົ່ງນ້ຳມັນສາຍໃໝ່ ແລະແກ້ໄຂບັນຫາກຳມະສິດທີ່ຍັງບໍ່ສາມາດຕົກລົງກັນໄດ້.

ລັດຖະບານແບກແດດຂອງອີຣັກໄດ້ຍົກປະເດັນການຟື້ນຟູທໍ່ສົ່ງນ້ຳມັນຮ່ວມດັ່ງກ່າວຂຶ້ນມາຫາລືຫຼາຍຄັ້ງ ໂດຍຝ່າຍຣິຢາດສະແດງທ່າທີພ້ອມເຫັນດີໃນຫຼັກການ ທີ່ຈະປັບປຸງຂໍ້ຕົກລົງລະຫວ່າງສອງປະເທດ ຫຼັງຈາກມີການຈັດຕັ້ງຄະນະກຳມະການດ້ານເຕັກນິກຮ່ວມກັນ.

ແນວໃດກໍຕາມ ໂຄງການນີ້ຍັງຈຳເປັນຕ້ອງມີການຫາລືລະຫວ່າງສອງປະເທດ ກ່ຽວກັບວິທີການກໍ່ສ້າງ, ຄ່າໃຊ້ຈ່າຍ ແລະກຳມະສິດໃນໂຄງສ້າງພື້ນຖານດັ່ງກ່າວ.

ແຫຼ່ງຂ່າວລະບຸວ່າ ຊາອຸດີອາຣະເບຍໄດ້ອະນຸມັດຂໍ້ສະເໜີເບື້ອງຕົ້ນໃນການຟື້ນຟູທໍ່ສົ່ງນ້ຳມັນຮ່ວມກັບອີຣັກແລ້ວ. ດັ່ງນັ້ນ ລັດຖະບານຊາອຸດີອາຣະເບຍຈຶ່ງພ້ອມປັບປຸງຂໍ້ຕົກລົງສອງຝ່າຍ ຫຼັງຈາກທັງສອງປະເທດຈັດຕັ້ງຄະນະກຳມະການດ້ານເຕັກນິກເພື່ອຫາລືລາຍລະອຽດຂອງໂຄງການ.

ທໍ່ສົ່ງນ້ຳມັນສາຍນີ້ມີຄວາມຍາວປະມານ 1,568 ກິໂລແມັດ ຖືກກໍ່ສ້າງຂຶ້ນໃນຊຸມປີ 1980 ໂດຍເຊື່ອມຕໍ່ແຫຼ່ງນ້ຳມັນຊູໄບຣ໌ (Zubair) ໃນແຂວງບັສຣາ ທາງພາກໃຕ້ຂອງອີຣັກ ກັບທ່າເຮືອຢັນບຸ (Yanbu) ຢູ່ຊາຍຝັ່ງທະເລແດງຂອງຊາອຸດີອາຣະເບຍ.

ທໍ່ສົ່ງນ້ຳມັນດັ່ງກ່າວໄດ້ຢຸດດຳເນີນການໃນເດືອນສິງຫາ ປີ 1990 ຫຼັງຈາກອີຣັກສົ່ງກອງທັບເຂົ້າບຸກຄູເວດ ແລະເກີດສົງຄາມອ່າວເປີເຊຍ.

ຄ່າຊ່ອມແປງສູງ ອາດຕ້ອງສ້າງທໍ່ໃໝ່ແທນ

ແນວໃດກໍຕາມ ການສ້ອມແປງທໍ່ສົ່ງນ້ຳມັນສາຍນີ້ບໍ່ແມ່ນເລື່ອງງ່າຍ.

ຊາອຸດີອາຣະເບຍເຫັນວ່າ ຄ່າໃຊ້ຈ່າຍໃນການສ້ອມແປງ ແລະປັບປຸງລະບົບເກົ່າ ອາດສູງເກືອບເທົ່າກັບການກໍ່ສ້າງລະບົບໃໝ່ທັງໝົດ.

ດັ່ງນັ້ນ ລັດຖະບານຊາອຸດີອາຣະເບຍຈຶ່ງສະເໜີໃຫ້ກໍ່ສ້າງທໍ່ສົ່ງນ້ຳມັນສາຍໃໝ່ຂຶ້ນມາແທນ ໂດຍໃຫ້ອີຣັກຮັບຜິດຊອບຄ່າໃຊ້ຈ່າຍບາງສ່ວນ ໂດຍສະເພາະສ່ວນຂອງທໍ່ທີ່ຕັ້ງຢູ່ພາຍໃນດິນແດນຂອງອີຣັກ.

ອີກບັນຫາໜຶ່ງຄື ຊາອຸດີອາຣະເບຍໄດ້ເຂົ້າຄອບຄຸມທໍ່ສົ່ງນ້ຳມັນສ່ວນທີ່ຢູ່ໃນດິນແດນຂອງຕົນໃນປີ 2001 ແລະໄດ້ນຳໂຄງສ້າງພື້ນຖານນັ້ນມາໃຊ້ຂົນສົ່ງນ້ຳມັນຈາກພາກຕາເວັນອອກຂອງປະເທດໄປຍັງທະເລແດງ.

ດັ່ງນັ້ນ ທັງສອງຝ່າຍຈຶ່ງຈຳເປັນຕ້ອງແກ້ໄຂບັນຫາກ່ຽວກັບກຳມະສິດ, ສິດໃນການນຳໃຊ້ ແລະຂໍ້ຕົກລົງທາງການເມືອງກ່ອນທີ່ໂຄງການຈະສາມາດເລີ່ມດຳເນີນການໄດ້.

ເປັນຫຍັງອີຣັກຈຶ່ງຕ້ອງການຟື້ນຟູເສັ້ນທາງນີ້?

ການຟື້ນຟູເສັ້ນທາງຂົນສົ່ງນ້ຳມັນຜ່ານຊາອຸດີອາຣະເບຍ ມີຄວາມສຳຄັນທາງຍຸດທະສາດຕໍ່ອີຣັກ ໃນຄວາມພະຍາຍາມກະຈາຍເສັ້ນທາງການສົ່ງອອກນ້ຳມັນ ແລະ ຫຼຸດການເພິ່ງພາການຂົນສົ່ງຜ່ານອ່າວເປີເຊຍ ແລະຊ່ອງແຄບຮໍມຸສ (Strait of Hormuz).

ເສັ້ນທາງໃໝ່ນີ້ຍັງອາດຊ່ວຍໃຫ້ລັດຖະບານອີຣັກມີຄວາມຍືດຫຍຸ່ນຫຼາຍຂຶ້ນໃນການຄວບຄຸມປະລິມານການສົ່ງນ້ຳມັນດິບໄປຍັງຕະຫຼາດສາກົນ.

ໂດຍສະເພາະໃນສະພາບການທີ່ຄວາມບໍ່ແນ່ນອນດ້ານຄວາມໝັ້ນຄົງໃນພາກພື້ນ ອາດສົ່ງຜົນກະທົບຕໍ່ກິດຈະກຳການຂົນສົ່ງທາງທະເລ ແລະພະລັງງານ.

ແຫ່ງທີ່ມາ: basnews/shafaq

ຂ່າວຕ່າງປະເທດ · 15:36 ໂມງ · ອ່ານ 6 ຄັ້ງ

ເກົາຫຼີເໜືອປະນາມການຊ້ອມຮົບຮ່ວມ “ອາເມຣິກາ-ເກົາຫຼີໃຕ້”



ເກົາຫຼີເໜືອປະນາມການຊ້ອມຮົບຮ່ວມລະຫວ່າງເກົາຫຼີໃຕ້ ແລະ ອາເມຣິກາ ເຊິ່ງແມ່ໃສ່ການເຊື່ອມໂຍງຂີດຄວາມສາມາດທາງການທະຫານແບບທຳມະດາຂອງເກົາຫຼີໃຕ້ ເຂົ້າກັບສະມັດຖະພາບດ້ານອາວຸດນິວເຄຼຍຂອງອາເມຣິກາ ໂດຍກ່າວຫາວ່າເປັນການຊັກຊ້ອມເຮັດສົງຄາມນິວເຄຼຍເພື່ອໂຈມຕີເກົາຫຼີເໜືອ ພ້ອມທັງຢືນຢັນວ່າຈະເລັ່ງພັດທະນາຂີດຄວາມສາມາດດ້ານນິວເຄຼຍ ເພື່ອຮັບມືກັບໄພຄຸກຄາມທັງໃນປັດຈຸບັນ ແລະ ອະນາຄົດ ໂດຍຖືເປັນນະໂຍບາຍປ້ອງກັນປະເທດທີ່ບໍ່ສາມາດປ່ຽນແປງໄດ້.

ເກົາຫຼີເໜືອໄດ້ອອກຖະແຫຼງການປະນາມການຊ້ອມຮົບຮ່ວມທາງການທະຫານລະຫວ່າງເກົາຫຼີໃຕ້ ແລະ ອາເມຣິກາ ເຊິ່ງເປັນການຜະສານຂີດຄວາມສາມາດທາງການທະຫານແບບທຳມະດາຂອງເກົາຫຼີໃຕ້ ເຂົ້າກັບສະມັດຖະພາບດ້ານອາວຸດນິວເຄຼຍຂອງອາເມຣິກາ ພ້ອມທັງປະກາດວ່າຈະເລັ່ງເສີມສ້າງສະມັດຖະພາບດ້ານນິວເຄຼຍ

ຂອງປະເທດຢ່າງຕໍ່ເນື່ອງ ໂດຍລະບຸວ່າເປັນນະໂຍບາຍປ້ອງກັນປະເທດທີ່ບໍ່ສາມາດປ່ຽນແປງໄດ້.

ສຳນັກຂ່າວກາງເກົາຫຼີ ຫຼື ເຄຊີເອັນເອ (KCNA) ສື່ທາງການຂອງເກົາຫຼີເໜືອ ໄດ້ລາຍງານຖະແຫຼງການຂອງ ທ່ານ ຄິມ ຈອງ-ຊິກ ຮອງຜູ້ນຳພາຝ່າຍທີໜຶ່ງແຫ່ງຄະນະທຳມະການກາງພັກແຮງງານເກົາຫຼີ ເຊິ່ງໄດ້ກ່າວຫາວ່າ ການຊ້ອມຮົບດັ່ງກ່າວທີ່ມີຊື່ວ່າ "ໄອອອນ ເມຊ" (Iron Mace) ແມ່ນການຊັກຊ້ອມສົງຄາມນິວເຄຼຍທີ່ຮ້າຍແຮງທີ່ສຸດ ໂດຍມີເປົ້າໝາຍເພື່ອໃຊ້ອາວຸດນິວເຄຼຍໂຈມຕີເກົາຫຼີເໜືອ ຫຼື ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ເກົາຫຼີ (ສປປ ເກົາຫຼີ) ເຊິ່ງເປັນຊື່ຢ່າງເປັນທາງການຂອງປະເທດ.

ທ່ານ ຄິມ ລະບຸວ່າ ການຊ້ອມຮົບຄັ້ງນີ້ຍິ່ງເປັນເຄື່ອງຢືນຢັນເຖິງຄວາມຖືກຕ້ອງຊອບທຳຂອງຄວາມພະຍາຍາມທີ່ເກົາຫຼີເໜືອຈະຕ້ອງເສີມສ້າງກອງກຳລັງນິວເຄຼຍຢ່າງບໍ່ຢຸດຢັ້ງ ເພື່ອໃຫ້ສາມາດຮັບມືກັບໄພຄຸກຄາມດ້ານນິວເຄຼຍໄດ້ຢ່າງເຕັມປະສິດທິພາບ.

ການຊ້ອມຮົບ ໄອອອນ ເມຊ ໄດ້ຈັດຂຶ້ນເປັນເວລາ 4 ວັນ ລະຫວ່າງວັນທີ 29 ກັນຍາ ຫາ ວັນທີ 2 ຕຸລາ ຢູ່ທີ່ກອງບັນຊາການຄະນະເສນາທິການທະຫານຮ່ວມເກົາຫຼີໃຕ້ ໃນນະຄອນຫຼວງໂຊລ ໂດຍມີເປົ້າໝາຍເພື່ອປະສານຂີດຄວາມສາມາດດ້ານນິວເຄຼຍຂອງອາເມຣິກາ ເຂົ້າກັບກຳລັງທະຫານແບບທຳມະດາຂອງເກົາຫຼີໃຕ້ ເພື່ອສະກັດກັ້ນໄພຄຸກຄາມຈາກເກົາຫຼີເໜືອ.

ທ່ານ ຄິມ ຍັງໄດ້ກ່າວປະນາມການຊ້ອມຮົບທາງການທະຫານອື່ນໆ ຂອງອາເມຣິກາ ແລະ ຊາດພັນທະມິດໃນພາກພື້ນນຳອີກ ເຊັ່ນ: ການຝຶກຊ້ອມພາກສະໜາມ ຮົກຸກ (Hoguk) ຂອງເກົາຫຼີໃຕ້, ການຝຶກຊ້ອມທາງອາກາດຂະໜາດໃຫຍ່ ຟຣີດອມ ແຟລກ (Freedom Flag) ລະຫວ່າງເກົາຫຼີໃຕ້ ແລະ ອາເມຣິກາ ແລະ ການຝຶກຊ້ອມ ຄີນ ຊອດ (Keen Sword) ລະຫວ່າງ ອາເມຣິກາ ແລະ ຍີ່ປຸ່ນ ເຊິ່ງຈັດຂຶ້ນລະຫວ່າງວັນທີ 19-29 ຕຸລາ ທີ່ຜ່ານມາ.

ນອກຈາກນີ້, ຍັງໄດ້ກ່າວຫາວ່າ ອາເມຣິກາໄດ້ເພີ່ມການສະແດງກຳລັງທາງການທະຫານ ແລະ ຂະຫຍາຍຂີດຄວາມສາມາດໃນການປະຕິບັດການທົ່ວພາກພື້ນ ທັງການສົ່ງກຳລັງພົນນາວິກະໂຍທິນອາເມຣິກາ ເຂົ້າຮ່ວມການຝຶກຊ້ອມລາດຕະເວນຫຼາຍມິຕິໃນເກົາຫຼີໃຕ້ ແລະ ການສົ່ງເຄື່ອງບິນຮົບຈາກຖານທັບໃນອາເມຣິກາ ເຂົ້າຮ່ວມການຝຶກຊ້ອມທາງການທະຫານໃນຍີ່ປຸ່ນ.

ທ່ານ ຄິມ ກ່າວວ່າ ກິດຈະກຳເຫຼົ່ານີ້ສະທ້ອນໃຫ້ເຫັນວ່າ ສັດຕູຂອງເກົາຫຼີເໜືອພວມເພີ່ມຄວາມເຂັ້ມຂຸ້ນໃນການເຄື່ອນໄຫວທາງການທະຫານ ທັງທີ່ເປີດເຜີຍຕໍ່ສາທາລະນະ ແລະ ດຳເນີນການຢ່າງລັບໆ ເຊິ່ງເຮັດໃຫ້ເກົາຫຼີເໜືອມີຄວາມຈຳເປັນຕ້ອງເພີ່ມຂີດຄວາມສາມາດດ້ານນິວເຄຼຍໃຫ້ແຂງແຮງຍິ່ງຂຶ້ນ ເພື່ອສະກັດກັ້ນຝ່າຍກົງກັນຂ້າມ ໂດຍທ່ານໄດ້ຍ້ຳວ່າ "ຄວາມເປັນຈິງໄດ້ສອນໃຫ້ເຫັນອີກຄັ້ງວ່າ ຄວາມເຂັ້ມແຂງຄືສັນຕິພາບ ແລະ ສັນຕິພາບຈະໄດ້ຮັບການຮັບປະກັນດ້ວຍຄວາມເຂັ້ມແຂງເທົ່ານັ້ນ".

ທ່ານ ຄິມ ຍັງລະບຸຕື່ມວ່າ ເກົາຫຼີເໜືອຈະເຮັດໃຫ້ໝັ້ນໃຈວ່າ ສະມັດຖະພາບໃນການສະກັດກັ້ນດ້ວຍອາວຸດນິວເຄຼຍ ຈະສາມາດປົກປ້ອງອະທິປະໄຕ ແລະ ຄວາມໝັ້ນຄົງຂອງປະເທດ ຕະຫຼອດຮອດສັນຕິພາບໃນພາກພື້ນໄດ້ຢ່າງມີຄວາມຮັບຜິດຊອບ ພ້ອມທັງຢ້ຳວ່າການເລັ່ງເສີມສ້າງສະມັດຖະພາບດັ່ງກ່າວໃຫ້ວ່ອງໄວຍິ່ງຂຶ້ນ ເພື່ອຮັບມືກັບໄພຄຸກຄາມທັງທີ່ມີຢູ່ ແລະ ອາດຈະເກີດຂຶ້ນໃນອະນາຄົດ ແມ່ນນະໂຍບາຍປ້ອງກັນປະເທດທີ່ບໍ່ສາມາດປ່ຽນແປງໄດ້.

ທັງນີ້, ການຊ້ອມຮົບ ໄອອອນ ເມຊ ແມ່ນຖືກຈັດຂຶ້ນເປັນປະຈຳທຸກປີ ຕັ້ງແຕ່ປີ 2024 ພາຍໃຕ້ຄວາມພະຍາຍາມດຳເນີນງານຕາມແນວທາງຮ່ວມ ທີ່ກຳນົດໂດຍຄະນະກຳລັງດ້ານນິວເຄຼຍເກົາຫຼີໃຕ້-ອາເມຣິກາ ເຊິ່ງເປັນກົນໄກຄວາມຮ່ວມມືລະຫວ່າງສອງປະເທດ ທີ່ຈັດຕັ້ງຂຶ້ນເພື່ອເສີມສ້າງການປ້ອງກັນ ແລະ ສະກັດກັ້ນ ແບບຂະຫຍາຍຜົນ (Extended Deterrence) ຕໍ່ໄພຄຸກຄາມຈາກອາວຸດນິວເຄຼຍຂອງເກົາຫຼີເໜືອ.

ລັດຖະບານຂອງ ປະທານາທິບໍດີ ອີ ແຈ-ມຍອງ ຂອງເກົາຫຼີໃຕ້ ບໍ່ໄດ້ປະກາດການຊ້ອມຮົບດັ່ງກ່າວລ່ວງໜ້າຕໍ່ສາທາລະນະ ເຊິ່ງຄາດວ່າເປັນຄວາມພະຍາຍາມຫຼີກເວັ້ນປະຕິກິລິຍາຕໍ່ຕ້ານຈາກເກົາຫຼີເໜືອ.

ປະເດັນທີ່ໜ້າສັງເກດຄື ຖະແຫຼງການຄັ້ງນີ້ເປັນການສົ່ງສັນຍານຜ່ານ ທ່ານ ຄິມ ຈອງ-ຊິກ ເຈົ້າໜ້າທີ່ລະດັບສູງທີ່ກຳກັບດູແລອຸດສາຫະກຳການຜະລິດອາວຸດຂອງເກົາຫຼີເໜືອ ແທນທີ່ຈະເປັນທ່ານນາງ ຄິມ ໂຢ-ຈອງ ນ້ອງສາວຂອງທ່ານ ຄິມ ຈອງ-ອຶນ ຜູ້ນຳສູງສຸດເກົາຫຼີເໜືອ ແລະ ຜູ້ນຳພາຝ່າຍກິດຈະການທົ່ວໄປຂອງພັກແຮງງານເກົາຫຼີ ຫຼື ໜ່ວຍງານດ້ານການຕ່າງປະເທດ ແລະ ກະຊວງປ້ອງກັນປະເທດ ເຊິ່ງມັກຈະເປັນຜູ້ສະແດງທ່າທີປະນາມກິດຈະກຳທາງການທະຫານຂອງເກົາຫຼີໃຕ້ ແລະ ອາເມຣິກາ ໃນໄລຍະທີ່ຜ່ານມາ.

ທ່ານ ອິມ ອິລ-ຊອນ ສາດສະດາຈານຈາກສະຖາບັນເອເຊຍຕາເວັນອອກໄກສຶກສາ ມະຫາວິທະຍາໄລຄຍອງນຳ ຂອງເກົາຫຼີໃຕ້ ກ່າວວ່າ ການທີ່ ທ່ານ ຄິມ ຈອງ-ຊິກ ເປັນຜູ້ສົ່ງສັນຍານຄັ້ງນີ້ມີຄວາມສຳຄັນເປັນພິເສດ ເນື່ອງຈາກເພີ່ນມີບົດບາດກຳກັບດູແລໂຄງການພັດທະນາອາວຸດຂອງເກົາຫຼີເໜືອ.

ທ່ານ ອິມ ລະບຸວ່າ ທ່ານ ຄິມ ຈອງ-ຊິກ ເປັນບຸກຄົນສຳຄັນໃນຂະແໜງວິທະຍາສາດ ແລະ ເຕັກໂນໂລຊີດ້ານການປ້ອງກັນປະເທດຂອງເກົາຫຼີເໜືອ ແລະ ມີບົດບາດກຳກັບດູແລການດຳເນີນງານຂອງຝ່າຍອຸດສາຫະກຳຍຸດໂທປະກອນຂອງພັກແຮງງານເກົາຫຼີ ລວມທັງສຳນັກງານບໍລິຫານຂີປນາວຸດ.

ເພີ່ນປະເມີນວ່າ ຖະແຫຼງການດັ່ງກ່າວສະທ້ອນເຖິງຄວາມມຸ່ງໝັ້ນຢ່າງຈິງຈັງຂອງລັດຖະບານພຽງຢາງ ທີ່ຈະເລັ່ງນຳອາວຸດນິວເຄຼຍທາງຍຸດທະວິທີ ແລະ ຂີດຄວາມສາມາດທາງການທະຫານແບບບໍ່ສົມດຸນມາຂົ່ມໃຊ້ຕົວຈິງ ເພື່ອຕອບໂຕ້ການຊ້ອມຮົບຮ່ວມຂອງເກົາຫຼີໃຕ້ ແລະ ອາເມຣິກາ ທີ່ຜະສານກຳລັງຮົບແບບທຳມະດາເຂົ້າກັບສະມັດຖະພາບດ້ານນິວເຄຼຍ.

ການເລືອກເຈົ້າໜ້າທີ່ລະດັບສູງທີ່ຮັບຜິດຊອບດ້ານການພັດທະນາອາວຸດມາເປັນຜູ້ສົ່ງສານ ຈຶ່ງອາດສະທ້ອນວ່າ ເກົາຫຼີເໜືອພວມໃຫ້ຄວາມສຳຄັນກັບການພັດທະນາຂີດຄວາມສາມາດດ້ານນິວເຄຼຍ ແລະ ຂີປນາວຸດໃຫ້ເກີດຜົນເປັນຮູບປະທຳ ຫຼາຍກວ່າການຕອບໂຕ້ດ້ວຍຖ້ອຍຖະແຫຼງທາງການທູດພຽງຢ່າງດຽວ.

ເຖິງຢ່າງໃດກໍຕາມ, ກະຊວງທຳນຸບຳລຸງແລະທ່ຽງທຳ (ກະຊວງທວມຊາດ) ຂອງເກົາຫຼີໃຕ້ ໄດ້ຫຼຸດຜ່ອນຄວາມສຳຄັນຂອງຖະແຫຼງການດັ່ງກ່າວ ໂດຍເບິ່ງວ່າເປັນພຽງການຢ້ຳຈຸດຢືນເດີມຂອງເກົາຫຼີເໜືອທີ່ມີມາຢ່າງຕໍ່ເນື່ອງ.

ທ່ານ ຍຸນ ມິນ-ໂຮ ໂຄສົກກະຄະຊວງທວມຊາດຂອງເກົາຫຼີໃຕ້ ກ່າວໃນການຖະແຫຼງຂ່າວປະຈຳວັນຈັນວ່າ ໂດຍສາລະສຳຄັນແລ້ວ ເກົາຫຼີເໜືອພຽງແຕ່ຢືນຢັນຈຸດຢືນເດີມທີ່ປະນາມການຊ້ອມຮົບຮ່ວມເຊິ່ງນຳໂດຍອາເມຣິກາ ວ່າເປັນການກະທຳທີ່ເປັນປໍລະປັກຕໍ່ເກົາຫຼີເໜືອ ແລະ ນຳມາໃຊ້ເປັນເຫດຜົນສະໜັບສະໜຸນການເສີມສ້າງສະມັດຖະພາບໃນການສະກັດກັ້ນດ້ວຍອາວຸດນິວເຄຼຍຂອງຕົນເອງ.

ທີ່ມາ: Yonhap

ຂ່າວຕ່າງປະເທດ · 10:24 ໂມງ · ອ່ານ 6 ຄັ້ງ

ເກົາຫຼີເໜືອທົດສອບຫົວຮົບລະເບີດລູກຫວ່ານ ທີ່ຕິດຕັ້ງກັບລູກສອນໄຟ ປະກາດວ່າພ້ອມນຳໃຊ້ 4 ຮູບແບບພາຍໃນປີນີ້



ສຳນັກຂ່າວກາງເກົາຫຼີ (KCNA) ຂອງເກົາຫຼີເໜືອ ລາຍງານວ່າ ສຳນັກງານບໍລິຫານຂີປະນາວຸດຂອງເກົາຫຼີເໜືອ ໄດ້ດຳເນີນການທົດສອບຫົວຮົບລະເບີດລູກຫວ່ານ ໃນວັນທີ 31 ຕຸລາ ເພື່ອປະເມີນປະສິດທິພາບໃນການສູ້ຮົບ ແລະ ອຳນາດການທຳລາຍຂອງຫົວຮົບ ທີ່ຖືກອອກແບບມາໃຫ້ຕິດຕັ້ງກັບຂີປະນາວຸດທາງຍຸດທະວິທີ.

ສະຖາບັນຄົ້ນຄວ້າພາຍໃຕ້ສຳນັກງານບໍລິຫານຂີປະນາວຸດ ລະບຸວ່າ ຜົນການທົດສອບຢືນຢັນວ່າ ຫົວຮົບລະເບີດລູກຫວ່ານມາດຕະຖານ ຮຸ່ນທີ 2 ສາມາດທຳລາຍພື້ນທີ່ເປົ້າໝາຍໄດ້ປະມານ 12-13 ເຮັກຕາ ຫຼື ປະມານ 119,000-129,000 ຕາແມັດ ດ້ວຍອຳນາດການໂຈມຕີທີ່ມີຄວາມໜາແໜ້ນສູງຫຼາຍ.

ຜູ້ອຳນວຍການສຳນັກງານບໍລິຫານຂີປະນາວຸດ ກ່າວວ່າ ເກົາຫຼີເໜືອໄດ້ແບ່ງຫົວຮົບລະເບີດລູກຫວ່ານອອກເປັນ 4 ປະເພດ ປະກອບມີຫົວຊະນິດມາດຕະຖານ ແລະ ຊະນິດທີ່ອອກແບບມາສຳລັບພາລະກິດສະເພາະ.

ໂດຍມີເປົ້າໝາຍໃຫ້ໜ່ວຍທະຫານສາມາດເລືອກ ແລະ ນຳເອົາຫົວຮົບທັງ 4 ປະເພດໄປໃຊ້ງານໄດ້ພາຍໃນປີນີ້ ໂດຍເລືອກໃຫ້ເໝາະສົມກັບຈຸດປະສົງຂອງປະຕິບັດການ ແລະ ລັກສະນະຂອງເປົ້າໝາຍ.

ລະເບີດລູກຫວ່ານ (Cluster Bomb) ແມ່ນອາວຸດທີ່ບັນຈຸລະເບີດຂະໜາດນ້ອຍຈຳນວນຫຼາຍສິບຫາຫຼາຍຮ້ອຍລູກໄວ້ພາຍໃນຫົວຮົບ ກ່ອນຈະປ່ອຍໃຫ້ກະຈາຍອອກໃນອາກາດ ເຮັດໃຫ້ສາມາດໂຈມຕີເປົ້າໝາຍຫຼາຍຈຸດໃນພື້ນທີ່ກວ້າງໄດ້.

ພາບທີ່ສື່ຂອງເກົາຫຼີເໜືອເຜີຍແຜ່ສະແດງໃຫ້ເຫັນການກະຈາຍຕົວ ແລະ ການລະເບີດຂອງລັດຖະລະເບີດຂະໜາດນ້ອຍ ລວມທັງການໂຈມຕີເປົ້າໝາຍເທິງເກາະ ເຊິ່ງມີສິ່ງປຸກສ້າງທີ່ຄາດວ່າຈຳລອງເປັນໂຮງເກັບເຮືອບິນ ແລະ ສາງເກັບລູກກະສຸນຂອງກອງທັບເກົາຫຼີໃຕ້.

ດ້ານກອງທັບເກົາຫຼີໃຕ້ ລະບຸວ່າ ໄດ້ຕິດຕາມການຍິງຂີປະນາວຸດດັ່ງກ່າວ ເຊິ່ງຖືກຍິງອອກຈາກພື້ນທີ່ໃກ້ເມືອງຊອງຈຸ (Chongju) ທາງຕອນເໜືອຂອງເກົາຫຼີເໜືອ ໂດຍມຸ່ງໜ້າໄປທາງທະເລເຫຼືອງ.

ຄະນະເສນາທິການທະຫານຮ່ວມຂອງເກົາຫຼີໃຕ້ ລະບຸວ່າ ເກົາຫຼີໃຕ້ ແລະ ສະຫະລັດ ໄດ້ແລກປ່ຽນຂໍ້ມູນກັນຢ່າງໃກ້ຊິດ ຕິດຕາມຄວາມເຄື່ອນໄຫວທີ່ກ່ຽວຂ້ອງກ່ອນການຍິງ ແລະ ກຽມພ້ອມຮັບມືກັບສະຖານະການຢ່າງຕໍ່ເນື່ອງ.

ທ່ານ ຊິນ ຈົງອຸ (Shin Jong-woo) ເລຂາທິການຂອງເວທີປາໄສຄວາມໝັ້ນຄົງ ແລະ ການປ້ອງກັນປະເທດຂອງເກົາຫຼີໃຕ້ ທີ່ກຸງໂຊລ ປະເມີນວ່າ ຂີປະນາວຸດທີ່ໃຊ້ໃນການທົດສອບຄັ້ງນີ້ ນ່າຈະເປັນລຸ້ນ ຮວາຊອງ-11RA (Hwasong-11RA).

ທັງນີ້ ເກົາຫຼີເໜືອເຄີຍທົດສອບຂີປະນາວຸດ Hwasong-11RA ທີ່ຕິດຕັ້ງຫົວຮົບລະເບີດລູກຫວ່ານມາແລ້ວ ໃນເດືອນເມສາທີ່ຜ່ານມາ. ໃນຄັ້ງນັ້ນ ທ່ານ ຄິມ ຈອງອຶນ ຜູ້ນຳເກົາຫຼີເໜືອ ໄດ້ເຂົ້າຮ່ວມສັງເກດການ ພ້ອມກັບ ຄິມ ຈູແອ ລູກສາວຂອງທ່ານ. ແຕ່ສຳລັບການທົດສອບໃນວັນເສົາທີ່ຜ່ານມາ ບໍ່ມີລາຍງານວ່າ ຄິມ ຈອງອຶນ ໄດ້ເຂົ້າຮ່ວມ.

ການທົດສອບອາວຸດຄັ້ງລ່າສຸດນີ້ ເກີດຂຶ້ນໃນຊ່ວງທີ່ເກົາຫຼີເໜືອກຳລັງເດີນໜ້າທົດສອບອາວຸດຫຼາຍປະເພດ ລວມທັງໂດຣນໂຈມຕີ, ລະບົບຕໍ່ປືໂດນຳວິຖີຮຸ່ນໃໝ່ ແລະ ຂີປະນາວຸດຄວາມໄວເໜືອສຽງພິໄສທາງ.

ຂະນະດຽວກັນ ຄວາມຕຶງຄຽດບໍລິເວນຊາຍແດນລະຫວ່າງສອງເກົາຫຼີກໍເພີ່ມສູງຂຶ້ນ ຫຼັງຈາກເກີດເຫດລະເບີດທຸ່ນລະເບີດ ເຮັດໃຫ້ທະຫານເກົາຫຼີໃຕ້ບາດເຈັບ 3 ນາຍ.

ເກົາຫຼີເໜືອໄດ້ປະຕິເສດຄວາມຮັບຜິດຊອບຕໍ່ເຫດການດັ່ງກ່າວ ພ້ອມທັງປະກາດເພີ່ມກຳລັງປ້ອງກັນບໍລິເວນຊາຍແດນ ແລະ ກຽມກັບມາໃຊ້ລຳໂພງກະຈາຍສຽງເພື່ອໂຄສະນາຊວນເຊື່ອອີກຄັ້ງ.

ຂະນະດຽວກັນ ລັດຖະມົນຕີຕ່າງປະເທດຂອງເກົາຫຼີໃຕ້, ສະຫະລັດ ແລະ ຍີ່ປຸ່ນ ຫາກໍຢືນຢັນຈຸດຢືນຮ່ວມກັນ ໃນການຫາລືສາມຝ່າຍທີ່ນະຄອນແອັດແລນຕາ ໂດຍຮຽກຮ້ອງໃຫ້ເກົາຫຼີເໜືອປົດອາວຸດນິວເຄຼຍຢ່າງສົມບູນ.

ດ້ານທ່ານ ມາໂກ ຣູບີໂອ (Marco Rubio) ລັດຖະມົນຕີຕ່າງປະເທດສະຫະລັດ ກ່າວເມື່ອວັນເສົາວ່າ ທ່ານ ໂດນັລ ທຣຳ ປະທານາທິບໍດີສະຫະລັດ ຍັງເປີດກວ້າງຕໍ່ການເຈລະຈາກັບ ຄິມ ຈອງອຶນ ຖ້າຫາກເກົາຫຼີເໜືອພ້ອມທີ່ຈະຫາລືປະເດັນທີ່ສະຫະລັດ ແລະ ປະເທດພັນທະມິດມີຄວາມກັງວົນ.

ແນວໃດກໍຕາມ ໃນຂະນະນີ້ ຍັງບໍ່ມີການກຳນົດວັນເວລາສຳລັບການພົບປະເຈລະຈາລະຫວ່າງຜູ້ນຳຂອງທັງສອງປະເທດ.

ແຫຼ່ງຂ່າວ (Source): Seoul Economic Daily

ຂ່າວຕ່າງປະເທດ · 19:37 ໂມງ · ອ່ານ 2 ຄັ້ງ

ມາເລເຊຍ ມ້ວາງຄະດີຢາເສບຕິດ ຂ້າມຊາດລາຍໃຫຍ່



ຕາມຂ່າວວິທະຍຸ ໂທລະພາບ ສູນກາງຈີນ(CMG) ລາຍງານວ່າ: ເມື່ອບໍ່ດົນມານີ້, ສປ ຈີນ ໄດ້ຮ່ວມປະຕິບັດການ ກັບປະເທດອິນໂດເນເຊຍ ແລະ ມາເລເຊຍ ໂດຍສາມາດ ມ້ວາງຄະດີການຜະລິດ ແລະ ຄ້າຂາຍຢາເສບຕິດຂ້າມຊາດລາຍໃຫຍ່, ເຊິ່ງຍຶດໄດ້ຢາໄອສ໌ທາດແຫລວ ປະມານ 1.2 ໂຕນ, ຈັບກຸມຜູ້ຕ້ອງສົງໄສ ໄດ້ 11 ຄົນ. ເດືອນຕຸລາປີ 2025, ພາກສ່ວນ ປາບປາມຢາເສບຕິດ ຂອງ ສປ ຈີນ ໄດ້ຕິດຕາມ ແລະ ພົບເຫັນກຸ່ມຄົນບໍ່ດີດັ້ງ ລັດສະກັດຢາເສບຕິດແຫ່ງໃຫຍ່ ຢູ່ນະຄອນບານດາອາເຊັກ ປະເທດຕົນ, ເຊິ່ງເປັນຄະດີຄ້າຂາຍ ຢາເສບຕິດລາຍໃຫຍ່ ທີ່ ສປ ຈີນ ຮ່ວມປະຕິບັດການຂ້າມຊາດ ກັບ ປະເທດອື່ນ ຈີນສາມາດຈັບກຸມຜູ້ຕ້ອງສົງໄສ ຈຳນວນຫລາຍທີ່ສຸດ ແລະ ປາບ ປາມຕ່ອງໂສ້ ຄ້າຂາຍຢາເສບຕິດ ຄົບ ວົງຈອນທີ່ສຸດໃນຊຸມປີຜ່ານມານີ້./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ຂ່າວຕ່າງປະເທດ · 19:00 ໂມງ · ອ່ານ 2 ຄັ້ງ

ກອງປະຊຸມຄົບຄະນະ ຂອງສູນກາງພັກກອມມູນິດຈີນ ຮັບຮອງເອົາ ເອກະສານສຳຄັນ ຫລາຍດ້ານ



ວິທະຍຸ ໂທລະພາບ ສູນກາງຈີນ, ສູນກາງພັກກອມມູນິດຈີນ ໄດ້ຈັດກອງປະຊຸມຖະແຫລງຂ່າວ ເພື່ອແນະນຳ ແລະບັນຍາຍເນື້ອໃນ ຈິດໃຈ ຂອງກອງປະຊຸມຄົບຄະນະຄັ້ງທີ 5 ຂອງຄະນະ ກຳມະ ການ ສູນກາງພັກກອມມູນິດຈີນສະໄໝທີ 20 ທີ່ຈັດຂຶ້ນ ເມື່ອບໍ່ດົນມານີ້. ທ່ານ ຖາງຟາງຢູ ຫົວໜ້າຫ້ອງການຄົ້ນຄວ້າ ນະໂຍບາຍ ສູນກາງພັກ ແນະນຳວ່າ:ຜົນສຳເລັດ ສຳຄັນ ທີ່ສຸດຂອງກອງປະຊຸມຄັ້ງນີ້ ແມ່ນໄດ້ຄົ້ນຄວ້າ ພິຈາລະນາ ແລະຮັບຮອງເອົາ “ຂໍ້ຕົກລົງຂອງສູນກາງພັກກອມມູນິດຈີນ ກ່ຽວກັບ ບາງບັນຫາສຳຄັນ ໃນການຍົດໝັ້ນ ຊຸກຍູ້ການບໍລິຫານພັກຢ່າງເຂັ້ມງວດ ຮອບດ້ານໃຫ້ສືບຕໍ່ ຍາວ ນານ”. ພັກກອມມູນິດຈີນ ມີອຸດົມການ ເພື່ອພາລະກິດຍິ່ງໃຫຍ່ ຂອງຊົນຊາດຈີນເຊິ່ງການກໍ່ສ້າງພັກກ່ຽວພັນເຖິງອະນາຄົດ ແລະ ຊາຕາກຳຂອງພັກ, ພ້ອມທັງ ກ່ຽວພັນເຖິງພາລະກິດ ຂອງພັກ-ລັດ ຈະເຕີບໃຫຍ່ ຫລື ຊຸດໂຊມ, ຈະປະສົບຜົນສຳເລັດ ຫລື ຈະຫລົ້ມເຫລວ.ໃນຈຸດເວລາສຳຄັນທີ່ພັກກອມມູນິດຈີນ ສ້າງຕັ້ງຂຶ້ນຄົບຮອບ 105 ປີ ແລະເປັນປີເລີ່ມປະຕິບັດ ແຜນພັດທະນາ ເສດຖະກິດ ສັງ ຄົມແຫ່ງຊາດ 5 ປີຄັ້ງທີ 15 ຂອງ ສປ ຈີນ, ກອງປະຊຸມຄັ້ງນີ້ ໄດ້ມີການຈັດວາງທາງຍຸດທະສາດ ກ່ຽວກັບການຄຸ້ມຄອງ ບໍລິຫານພັກ, ການສ້າງຄວາມຈະເລີນ ແລະ ເຂັ້ມແຂງຂອງພັກ ເຊິ່ງມີຄວາມ ໝາຍ ສຳຄັນຍິ່ງ ແລະມີຄວາມຈຳເປັນທີ່ສຸດ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ຂ່າວຕ່າງປະເທດ · 23:59 ໂມງ · ອ່ານ 1 ຄັ້ງ

ຍີ່ປຸ່ນ ຈະປັບຂຶ້ນລາຄາອາຫານ-ເຄື່ອງດື່ມ ເກືອບ 1.500 ລາຍການ



ສຳນັກຂ່າວຊິນຮວາ ຂອງ ສປຈີນ ລາຍງານຈາກ ເຕໂກກຸ ດາຕາແບ່ງ (Teikoku Databank) ເປັນບໍລິສັດຄົ້ນຄວ້າ ຂອງ ຍີ່ປຸ່ນ ເປີດເຜີຍວ່າ: ຜະລິດ ຕະພັນ ອາຫານ ແລະ ເຄື່ອງດື່ມ ຈາກ ຜູ້ຜະລິດ ລາຍໃຫຍ່ 195 ແຫ່ງ ຢູ່ໃນ ຍີ່ປຸ່ນ ຈະປັບຂຶ້ນ ລາຄາ ໃນເດືອນພະຈິກນີ້ ລວມ 1.477 ລາຍການ, ເພີ່ມຂຶ້ນເກືອບ 10 ເທົ່າ ເມື່ອທຽບໃສ່ຈຳນວນ ສິນຄ້າ 150 ລາຍການ ໃນໄລຍະດຽວກັນ ຂອງ ປີ 2025.

ໂດຍສິນຄ້າ ໃນກຸ່ມ ເຄື່ອງປຸງລົດຊາດ ເຊັ່ນ:ຊອດ ແລະ ມາໂยเนส (Mayonnaise) ເປັນກຸ່ມ ທີ່ມີອັດຕາສ່ວນ ການປັບຂຶ້ນ ລາຄາ ຫລາຍທີ່ສຸດ (644 ລາຍການ), ຖັດມາແມ່ນ ເຄື່ອງດື່ມ ທັງຊະນິດ ທີ່ມີ ແອລກໍຮໍ ແລະ ບໍ່ມີແອລກໍຮໍ (417 ລາຍການ).

ນອກຈາກນັ້ນ, ປະເທດ ຍີ່ປຸ່ນ ຍັງມີ ຜະລິດ ຕະພັນ ອາຫານ ແລະ ເຄື່ອງດື່ມ ທີ່ປັບຂຶ້ນ ລາຄາແລ້ວ ຈຳນວນ 20.327 ລາຍການ ຊຶ່ງເປັນປີທີ 2 ຕິດຕໍ່ກັນ ທີ່ມີການຂຶ້ນ ລາຄາ ສິນຄ້າ ຫລາຍກວ່າ 20.000 ລາຍການ, ໃນຂະນະທີ່ທ່າອຽງ ການປັບຂຶ້ນ ລາຄາ ໃນປີ 2027 ອາດຈະຢຸດຈົ້ງ, ເນື່ອງຈາກ ຜູ້ປະກອບການ ໄດ້ທະຍອຍ ຜ່ານຜ່າ ຕົ້ນທຶນທີ່ເພີ່ມສູງຂຶ້ນໄປຍັງ ຜູ້ບໍລິໂພກ ແລະ ຍັງຕ້ອງປະເມີນ ກະແສ ຕອບຮັບ ຂອງ ຜູ້ບໍລິໂພກ ຢ່າງຮອບດ້ານ./

ຂ່າວຕ່າງປະເທດ · 23:05 ໂມງ · ອ່ານ 1 ຄັ້ງ

ອະນຸສັນຍາ ການຍົກລະດັບ ສັນຍາການຄ້າເສລີ ຈີນ-ເປຣູ ມີຜົນບັງຄັບໃຊ້ ຢ່າງເປັນທາງການ



ວິທະຍຸ ໂທລະພາບສູນກາງຈີນ, ກະຊວງການຄ້າ ຈີນ ປະກາດໃນວັນທີ 1 ພະຈິກນີ້ວ່າ: ອະນຸສັນຍາ ກ່ຽວກັບ ການຍົກລະດັບ “ສັນຍາການຄ້າເສລີ ລະຫວ່າງ ລັດຖະບານສາທາລະນະລັດ ປະຊາຊົນຈີນ ແລະ ລັດຖະບານ ສາທາລະນະລັດເປຣູ” ເລີ່ມມີຜົນບັງຄັບໃຊ້ ຢ່າງ ເປັນທາງການ ໃນວັນທີ 1 ພະຈິກນີ້. ສປ ຈີນ ແລະ ເປຣູ ໄດ້ດຳເນີນການເຈລະຈາກ່ຽວກັບ ການຍົກລະດັບ ຂອງສັນຍາການຄ້າເສລີ ນັບແຕ່ເດືອນພະຈິກປີ 2018 ເປັນຕົ້ນມາແລະ ໄດ້ລົງນາມໃນ ອະນຸສັນຍາການຍົກລະດັບ ໃນວັນທີ 14 ພະຈິກປີ 2024. ອະນຸສັນຍາໄດ້ຍົກລະດັບສັນຍາການຄ້າເສລີ ສະບັບເກົ່າ, ໂດຍໄດ້ປັບປຸງ 7 ພາກທີ່ມີຢູ່ແລ້ວ, ລວມທັງໄດ້ປັບປຸງກົດລະບຽບແຫລ່ງ ຜະລິດ, ລະບຽບການດ່ານພາສີ ແລະ ການອຳນວຍຄວາມ ສະດວກ ດ້ານການຄ້າ, ນອກນີ້, ໄດ້ເພີ່ມ 5 ພາກໃໝ່ ເຊັ່ນ: ການຮ່ວມມືດ້ານມາດຕະຖານ ແລະ ການປະເມີນ ຄວາມສອດຄ່ອງ, ນະໂยบาย ການແຂ່ງຂັນ, ການຄ້າເอ ເລັກໂตรนิก ແລະ ອື່ນໆ. ສອງຝ່າຍ ຍັງໄດ້ກຳນົດ ຂໍ້ກຳນົດໃນອະນາຄົດ ສຳລັບ ການເຈລະຈາກ່ຽວກັບ ການຄ້າການ ບໍລິການແລະບັນຊີລາຍການທາງລົບ ດ້ານ ການລົງທຶນຕື່ມອີກ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 16 ໃນສະບັບນີ້

ຂ່າວຕ່າງປະເທດ · 23:01 ໂມງ · ອ່ານ 1 ຄັ້ງ

ອັດກອງປະຊຸມ ພາຄີສົນທິສັນຍາ ຊີວະນານາພັນ ຂອງອົງການ ສະຫະປະຊາຊາດ ຄັ້ງທີ 17



ວິທະຍຸ ໂທລະພາບສູນກາງຈີນ, ກອງປະຊຸມພາຄີສົນທິສັນຍາ ຊີວະນານາພັນ ຂອງອົງການສະຫະ ປະຊາຊາດ ຄັ້ງທີ 17 ໄດ້ອັດລົງຢູ່ນະຄອນຫລວງເຢເຣວັນຂອງ ອາກເມນີ ໂດຍໄດ້ຜ່ານການຮັບຮອງຂໍ້ຕົກລົງ ທີ່ກ່ຽວຂ້ອງ ກັບຫົວຂໍ້ຕ່າງໆເຊັ່ນ: ການຈັດວາງຊັບພະຍາກອນ ແລະ ການສຳຫລວດກວດກາ ຄວາມຄືບໜ້າ ຮ່ວມກັນທົ່ວໂລກ ຄັ້ງທຳອິດ ກ່ຽວກັບ ສະພາບການຈັດຕັ້ງປະຕິບັດ“ຂອບຊີວະນານາພັນໂລກ ຄຸນໝິງ-ມິນເຕເຣອ” ແລະ ບົດລາຍງານ ກອງປະຊຸມ ພ້ອມທັງ ໄດ້ຮຽກຮ້ອງໃຫ້ທຸກຝ່າຍ ເລັ່ງລັດ ຈັດຕັ້ງປະຕິບັດ ຂອບດັ່ງກ່າວ.ກອງປະຊຸມຄັ້ງນີ້ຕົ້ນຕໍ ໄດ້ ສຳຫລວດກວດກາຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ “ຂອບຊີວະນານາພັນໂລກ ຄຸນໝິງ-ມິນເຕເຣອ”ທີ່ໄດ້ຜ່ານ ການຮັບຮອງໃນປີ 2022,ຂອບດັ່ງກ່າວ ໄດ້ກຳນົດເປົ້າ ໝາຍ ການເຄື່ອນໄຫວ 23 ໂຄງການທີ່ມຸ້ງໜ້າສູ່ປີ 2030. ກອງປະຊຸມຍັງໄດ້ວິເຄາະ ຄວາມຫລຸດໂຕນກັນ ໃນການຈັດຕັ້ງປະຕິບັດເປົ້າໝາຍ ພ້ອມທັງ ໄດ້ຄົ້ນຄວ້າ ຊ່ອງທາງ ຂອງການເລັ່ງລັດຈັດຕັ້ງປະຕິ ບັດ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ໂຄສະນາ


EMERGING DIGITAL SOLUTIONS
ແນວຄິດ → ອອກແບບ → ເປີດໃຊ້ງານ
ຮັບອອກແບບ ແລະ ພັດທະນາ ເວັບໄຊທ์ · ແອັບ · ລະບົບທຸລະກິດ
ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ
ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້
ອໍເດີໃໝ່ #1024 ຈາກແອັບ
app.huanlao.la/dashboard
ເຮືອນລາວ
ພາບລວມມື້ນີ້
ຍອດຂາຍມື້ນີ້
₭ 4.250.000
ອໍເດີ
86
ລູກຄ້າໃໝ່
12
ຍອດຂາຍ 7 ມື້
ຢາກມີລະບົບ ເປັນຂອງ ຕົວເອງບໍ? ເຮົາສ້າງໃຫ້
ມື້ນີ້ກິນຫຍັງດີ?
ເຝີງົ້ວພິເສດ
₭ 45.000
ລາບໄກ່
₭ 40.000
ຕຳໝາກຮຸ່ງ
₭ 25.000
ສິ່ງທີ່ພວກເຮົາສ້າງໃຫ້ທ່ານ
ເວັບໄຊທ์ທຸລະກິດ
ເວັບແອັບ
ແອັບມືຖື
ຮ້ານຄ້າອອນລາຍ
ລະບົບ CRM
ລະບົບ ERP
ປລັກອິນ & API
ໂຊລູຊັນ AI
ຕິດຕໍ່ໄດ້ເລີຍ, ໃຫ້ຄຳປຶກສາຟຣີ
020 58886182
ສະແກນ QR ເພື່ອແຊັດ WhatsApp · eds.la

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ວັນອັງຄານ 3 ພະຈິກ 2026 · ສະບັບທີ 013

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 22/10/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 40,230**	**▼ 34,490**	**▼ 34,040**
ແຂວງວຽງຈັນ	▼ 40,230	▼ 34,490	▼ 34,040
ຜົ້ງສາລີ	▼ 41,220	▼ 35,480	▼ 35,030
ຫຼວງນ້ຳທາ	▼ 40,720	▼ 34,990	▼ 34,530
ອຸດົມໄຊ	▼ 40,900	▼ 35,160	▼ 34,710
ບໍ່ແກ້ວ	▼ 40,330	▼ 34,590	▼ 34,140
ຫຼວງພະບາງ	▼ 40,740	▼ 35,000	▼ 34,550
ຫົວພັນ	▼ 40,740	▼ 35,000	▼ 34,550
ໄຊຍະບຸລີ	▼ 40,550	▼ 34,820	▼ 34,370
ຊຽງຂວາງ	▼ 40,430	▼ 34,680	▼ 34,230
ໄຊສົມບຸນ	▼ 40,650	▼ 34,910	▼ 34,470
ບໍລິຄຳໄຊ	▼ 40,280	34,540	▼ 34,090
ຄຳມ່ວນ	▼ 40,260	▼ 34,520	–
ສະຫວັນນະເຂດ	▼ 40,260	▼ 34,520	▼ 34,070
ສາລະວັນ	▼ 40,510	▼ 34,780	▼ 34,330
ເຊກອງ	▼ 40,510	▼ 34,770	▼ 34,330
ຈຳປາສັກ	▼ 40,290	▼ 34,550	▼ 34,100
ອັດຕະປື	▼ 40,560	▼ 34,820	▼ 34,370

ແຫຼ່ງ: ລາຍການລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (17/09)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

03/11	🛕	ວັນພຣະ
09/11	🛕	ວັນພຣະ
10/11	★	ເດືອນ 12
17/11	🛕	ວັນພຣະ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍອັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 02/11/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▲ 22,297	▲ 22,638
THB ບາດ ໄທ	▼ 667.00	▼ 680.26
CNY ຢວນ ຈີນ	▲ 3,332	▲ 3,398
EUR ເອີໂຣ	▲ 24,946	▲ 25,441
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▼ 141.25	▼ 144.05
SGD ໂດລາ ສິງກະໂປ	▼ 17,101	▼ 17,782
GBP ປອນ ອັງກິດ	▲ 29,770	▲ 30,362

ສະເລ່ຍທະນາຄານ (ທຫລ): USD ຊື້ 22,413 · ຂາຍ 22,636 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳຮູບປະພັນ 1 ບາດ

44,300,000

▲ 560,000

ຄຳແທ່ງ 99.99% · 1 ກຣາມ

2,913,400

▼ 41,400

ອັບເດດ 03/11 05:15 · mahaxan.com/today/gold

ຫວຍພັດທະນາ

ງວດ 187

ອອກວັນທີ 02/11/2026

738155

ງວດ 186 · 30/10	863206
ງວດ 185 · 29/10	723294
ງວດ 184 · 28/10	740618
ງວດ 183 · 27/10	653372

ພະຍາກອນອາກາດ

ວັນອັງຄານ 3 ພະຈິກ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	23.9–31.2°C	ເມກບາງສ່ວນ
ຫຼວງພະບາງ	23.0–31.9°C	ເມກບາງສ່ວນ
ໂພນສະຫວັນ	17.4–27.3°C	ມີຝົນ
ຊຳເໜືອ	18.2–27.4°C	ມີຝົນ
ສະຫວັນນະເຂດ	23.7–31.5°C	ມີຝົນ
ປາກເຊ	24.0–31.1°C	ມີຝົນ


ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ແຈ້ງການ

ແຈ້ງການມອດໄຟ ວັນທີ 03,05,07/11/2026



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ລັດວິສາຫະກິດໄຟຟ້າລາວ
ຝ່າຍຄຸ້ມຄອງລະບົບໄຟຟ້າພາກກາງ
ສາຂາພະແນກຫຼວງວຽງຈັນ 1

ເລກທີ.....ຄ/ຫຄ.ຝຄລ.ພລ1
ນະຄອນຫຼວງວຽງຈັນ, ວັນທີ.....

ແຈ້ງການມອດໄຟ

ເຖິງ : ຜູ້ຊົມໃຊ້ໄຟຟ້າ ຕາມຊຸມບ້ານ, ໂຮງຈັກ, ໂຮງງານ, ສຳນັກງານຕ້ອງການຂອງພາກລັດ ແລະ ເອກະຊົນເພື່ອຮັບຊາບ.

ເລື່ອງ: ຈໍ່ມອດໄຟ 22 kV MSS 3.1 ສະຖາປັໄຟຟ້າຫາດຫຼວງ.

- ອີງຕາມແຜນວຽກປັບປຸງ PTP ແລະ ປ່ຽນຖ່າຍ LBS, RCS ສະບັບເລກທີ 1212/ຝຄລ.ພລ1.ຄລບ ລົງ ວັນທີ 26/10/2026

ສາຂາພະແນກຫຼວງວຽງຈັນ 1, ຂໍຖືເປັນກຽດແຈ້ງມາຍັງຜູ້ຊົມໃຊ້ໄຟຟ້າຊາບວ່າ ໃນວັນທີ 03/11/2026 ເວລາ 09:00 - 14:00 ໂມງ, (ລວມເວລາ 5 ຊົ່ວໂມງ) ຈະໄດ້ມອດໄຟໃຫ້ຫ້ອງການຊຸມຄອງລະບົບ ແລະ ບໍລິການ ເພື່ອປະຕິບັດວຽກຕັດແປງສາຍທາງອ່ຽ ປັບປຸງ PTP ໃນບ້ານ ບ້ານ ຫາດຫຼວງໃຕ້, ເມືອງ ໃຊ້ເສດຖາ ນະຄອນຫຼວງວຽງຈັນ. ມອດແຕ່ສະຖານີ ຫາ LBS ທີ່ຫາດຫຼວງພອາຊາ ຫາ LBS ຮ້ອງແກ. ລາຍລະອຽດເຂດ ທີ່ມີການມອດໄຟມີດັ່ງລຸ່ມນີ້:

1. ບ້ານ ຫາດຫຼວງໃຕ້ ຮ້ອມ 1, 2, 3, 4, 5, 6, 17, 18, 19, 20, 21
2. ບ້ານ ຮ້ອງແກ ຮ້ອມ 1-6.
3. ໂຮງແຮມ ຫາດຫຼວງມ້ວ
4. ຮ້ານສະດວກຊື້ 7 ELEVEN.
5. BIG C ຫາດຫຼວງ.
6. ຫາດຫຼວງພອາຊາ,ບໍລິສັດເອວາຈະເລີນ DT ການຄ້າ
7. ບໍລິສັດ SMP
8. ໜ້ໍ່ແຍງສ້ອນຄົວຈຳນວນໜຶ່ງ.
9. ເຮືອນໜ້ໍ່ແມ່ປະຊາຊົນ, ໂຮງແຮມ, ບ້ານພັກ ແລະ ກິດຈະການອື່ນໆພາຍໃນບໍລິເວນດັ່ງກ່າວ

ໝາຍເຫດ: ຖ້າພົ້ນບໍ່ຕົກ ຈະໄດ້ມອດໄຟອີກວຽກຕາມໃນແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງຜູ້ຊົມໃຊ້ໄຟຟ້າເພື່ອຮັບຊາບ ເພື່ອຫາວິທີກະກຽມ ແລະ ສ້ຳຮຸ້ງໄຂຫົດ ແທນໄວ້ລ່ວງໜ້າຢ່າງທັນເວລາ ແລະ ຂໍອະໄພໃນຄວາມບໍ່ສະດວກໃນ ໂອກາດນ້ີ.


ຮຽນມາດ້ວຍຄວາມເຄົາລົບນັບຖືຢ່າງສູງ.

ຫົວໜ້າສາຂາພະແນກຫຼວງວຽງຈັນ 1

ທະນົງສັກ ທຽງສະຫວັນ

ແຈ້ງການ

ເມືອງປາກລາຍ ຫ້າມລົດສ່ວນຕົວ ປະກາດຮັບຜູ້ໂດຍສານທາງອອນລາຍ ກວດພົບຈະຖືກປັບໃໝ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງປາກລາຍ
ຫ້ອງວ່າການເມືອງ

ເລກທີ 832/ຫວມ
ປາກລາຍ, ວັນທີ 30-10-2026

ແຈ້ງການ

ເຖິງ: ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ, ພໍ່ຄ້າແມ່ຂາຍ ແລະ ປະຊາຊົນບັນດາເຜົ່າ ພາຍໃນເມືອງປາກລາຍ.

ເລື່ອງ: ຫ້າມລົດສ່ວນຕົວ, ລົດຂົນສົ່ງສິນຄ້າ ປະກາດທາງສື່ອອນລາຍເພື່ອຮັບເອົາຄົນ ໂດຍສານຮ່ວມເດີນທາງ ຢ່າງເດັດຂາດ.

- ອີງຕາມ ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງວ່າການເມືອງປາກລາຍ, ສະບັບເລກທີ 837/ຄປລ, ລົງວັນທີ 31 ສິງຫາ 2026;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລືວຽກງານຂົນສົ່ງໂດຍສານ ພາຍໃນເມືອງປາກລາຍ ຄັ້ງວັນທີ 28 ກັນຍາ 2026.

ເພື່ອເຮັດໃຫ້ການຂົນສົ່ງໂດຍສານທາງບົກມີຄວາມເປັນລະບຽບຮຽບຮ້ອຍ,ຖືກຕ້ອງຕາມລະບຽບກົດໝາຍ ແລະ ຫຼີກລ້ຽງຜົນກະທົບຕໍ່ຜູ້ປະກອບການຂົນສົ່ງທາງບົກ.

ຫ້ອງວ່າການເມືອງປາກລາຍ ຂໍຖືເປັນກຽດ ແຈ້ງມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາ ເຫັນວ່າມີລົດຂົນສົ່ງສ່ວນ ບຸກຄົນ (ລົດສ່ວນຕົວປ້າຍເຫຼືອງ), ລົດຂົນສົ່ງສິນຄ້າ ທີ່ແລ່ນຕາມເສັ້ນທາງລະຫວ່າງ ເມືອງປາກລາຍ - ເມືອງໄຊຍະບຸລີ,ເມືອງ ປາກລາຍ - ເມືອງແກ່ນທ້າວ, ເມືອງປາກລາຍ ຫາ ຕ່າງແຂວງ ໂດຍເຈົ້າຂອງລົດເກັບເອົາຄົນໂດຍສານ ແລະ ໄດ້ປະກາດລົງທາງສື ອອນລາຍ ເພື່ອຫາຄົນໂດຍສານຮ່ວມເດີນທາງນຳ ແລະເກັບເງິນຄ່າໂດຍສານນຳຜູ້ຮ່ວມເດີນທາງ ເຊິ່ງການກະທຳດັ່ງກ່າວນັ້ນ ແມ່ນ ຜິດຕໍ່ລະບຽບກົດໝາຍວ່າດ້ວຍການຂົນສົ່ງທາງບົກ ແລະ ຍັງສົ່ງຜົນກະທົບໂດຍກົງຕໍ່ຜູ້ປະກອບການລົດຂົນສົ່ງໂດຍສານ ໃນກໍລະນີຝ່າຝືນ ເຈົ້າໜ້າທີ່ກວດກາພົບເຫັນ ແມ່ນຈະໄດ້ ປັບໃໝ ແລະ ປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

ດັ່ງນັ້ນ,ຈຶ່ງຂໍຈ້ງມາຍັງທຸກພາກສ່ວນເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຫົວໜ້າຫ້ອງວ່າການເມືອງ

ຫ້ອງວ່າການ

ທຸມພັນ ພູມມີ

ກິລາ · 14:07 ໂມງ · ອ່ານ 11 ຄັ້ງ

U10 ເບ ສະຫວັນ ຄອງແຊ້ມບານເຕະເຍົາວະຊຶນນາໆຊາດ SingaCup 2026 ທີ່ສິງກະໂປ



ການແຂ່ງຂັນບານເຕະເຍົາວະຊຶນນານາຊາດ SingaCup 2026 ໃນລະຫວ່າງວັນທີ 31 ຕຸລາ ຫາ 7 ພະຈິກ 2026 ທີ່ປະເທດສິງກະໂປ ສະໂມສອນ ເບ ສະຫວັນ ເອັຟຊີ ຮຸ່ນອາຍຸບໍ່ເກີນ 10 ປີ (U10) ຈາກ ສປປ ລາວ ສາມາດສ້າງຜົນງານໄດ້ຢ່າງໂດດເດັ່ນ ຄອງແຊ້ມ ໄດ້ສຳເລັດຕາມເປົ້າໝາຍທີ່ວາງໄວ້ ພາຍຫຼັງນັດຊີ້ຊະນະເລີດ ເອົາຊະນະ ສະໂມສອນ BESM Woodleigh FC ຈາກ ສິງກະໂປ ເຈົ້າພາບ 7-1.

ສຳລັບຜົນງານໃນຮອບແບ່ງກຸ່ມ ສະໂມສອນ ເບ ສະຫວັນ ລົງສະໜາມໃນຮອບຄັດເລືອກ 3 ນັດ ຊະນະ 2 ສະເໝີ 1 ມີ 7 ຄະແນນ ໄດ້ທີ 1 ຂອງກຸ່ມ F ໂດຍນັດ ທຳອິດ ເບສະຫວັນ ຊະນະ Sunstrikers FC ຈາກຟິລິບ ປິນ 6-0, ນັດທີ 2 ເບສະຫວັນ ສະເໝີກັບ Fortaleza Juniors ຈາກສິງກະໂປ ເຈົ້າພາບ 0-0, ນັດທີ 3 ເບສະຫວັນ ຊະນະ Fluxnesia Soccer Academy ຈາກອິນໂດເນເຊຍ 9-0, ຮອບເພອ້ອຟ ເບ ສະຫວັນ ຊະນະ Neeb K Sports Academy ຈາກອິນເດຍ 3-0.

ສ່ວນຮອບ 16 ທີມສຸດທ້າຍ ເບ ສະຫວັນ ຊະນະ Dallaz Kids FC ຈາກມາເລເຊຍ 7-0,ຮອບ 8 ທີມ ສຸດທ້າຍ ເບ ສະຫວັນ ຊະນະ TSSX ຈາກມາເລເຊຍ 7-1, ຮອບ 4 ທີມ ສຸດທ້າຍ ເບສະຫວັນ ຊະນະ MMM ຈາກສິງກະໂປ ເຈົ້າພາບ 5-0. ສະໂມສອນ ເບ ສະຫວັນ ເອັຟຊີ (BAY SAVANH FC) ເປັນໜຶ່ງດຽວຈາກລາວ ທີ່ເຂົ້າຮ່ວມແຂ່ງຂັນ ຮຸ່ນອາຍຸບໍ່ເກີນ 10 ປີ (U10) ໂດຍມີ 36 ທີມ ແບ່ງອອກເປັນ 8 ກຸ່ມ.

(ແຫຼ່ງຂ່າວ: ວຽງຈັນໃໝ່)

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນຈັນ 2 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝູ່ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.